ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

17-20 ສິງຫາ 2022
ປີທີ 11
ສະບັບທີ 868

## ປະທານ ສພຊ ຕ້ອນຮັບປະທານສານປະຊາຊົນສູງສຸດ ແຫ່ງ ສສ.ຫວຽດນາມ

(ສພຊ) ວັນທີ 12 ສິງຫາ ຜ່ານມາ, ທີ່ຫ້ອງຮັບແຂກສະພາແຫ່ງຊາດ ສະຫາຍ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ໄດ້ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງສະຫາຍ ຫງວຽນຮ່ວາ ບິ່ງ ກຳມະການກົມການເມືອງ, ເລຂາທິການສູນກາງພັກ, ເລຂາຄະນະພັກ, ປະທານສານປະຊາຊົນສູງສຸດ ແຫ່ງ ສສ.ຫວຽດນາມ ພ້ອມດ້ວຍຄະນະ ເນື່ອງໃນໂອກາດທີ່ເດີນທາງມາເຂົ້າຮ່ວມກອງປະຊຸມສານບັນດາແຂວງທີ່ມີຊາຍແດນຕິດຈອດກັນ 3 ປະເທດ ສປປລາວ, ສສ.ຫວຽດນາມ ແລະ ຣາຊະອານາຈັກກຳປູເຈຍ ຄັ້ງທີ VI ໃນລະຫວ່າງວັນທີ 9-13 ສິງຫານີ້ ທີ່ນະຄອນຫລວງວຽງຈັນ.



ການພົບປະຄັ້ງນີ້ ເປັນໂອກາດອັນດີໃຫ້ແກ່ທັງສອງຝ່າຍໄດ້ພົບປະ ແລະ ແລກປ່ຽນຄຳຄິດຄຳເຫັນນຳກັນ ເພື່ອເປັນການຮັດແໜ້ນຄວາມສາມັກຄີ ແລະ ການຮ່ວມມືຮອບດ້ານລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ ໃຫ້ນັບມື້ເຂົ້າສູ່ລວງເລິກ ແລະ ຢູ່ໃນທ່າມກາງການສະເຫລີມສະຫລອງປີສາມັກຄີມິດຕະພາບ ປີ 2022 ກໍຄື ຄົບຮອບ 60 ປີວັນສ້າງຕັ້ງສາຍພົວພັນການທູດ ແລະ ຄົບຮອບ 45 ປີວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມືລາວ-ຫວຽດນາມ.

ໂອກາດນີ້, ສະຫາຍ ປອ. ໄຊສົມພອນ ພົມວິຫານ ໄດ້ກ່າວສະແດງຄວາມຕ້ອນຮັບຢ່າງອົບອຸ່ນ ສະແດງຄວາມຂອບໃຈເປັນຢ່າງສູງ ທີ່ສະຫາຍ ພ້ອມດ້ວຍຄະນະ ໄດ້ນຳເອົາມິດຈິດມິດໃຈອັນດູດດື່ມ, ຄວາມສາມັກ

ອ່ານຕໍ່ໜ້າ 2

## ທ່ານ ປອ. ໄຊສົມພອນ ພົມວິຫານ ຢ້ຽມຢາມ ແລະ ເຮັດວຽກຢູ່ແຂວງອຸດົມໄຊ



ໜ້າ 3

## ເຝິກອົບຮົມວຽກງານໂຄສະນາ ເຜີຍແຜ່ລັດຖະທຳມະນູນ ແລະ ກົດໝາຍ

(ສພຊ) ກອງປະຊຸມເຝິກອົບຮົມວຽກງານໂຄສະນາເຜີຍແຜ່ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃຫ້ແກ່ພະນັກງານ-ລັດຖະກອນຂອງກຳມາທິການກົດໝາຍ ແລະ ສະພາປະຊາຊົນຂັ້ນແຂວງ ໄດ້ຈັດຂຶ້ນໃນລະຫວ່າງວັນທີ 15-17 ສິງຫາ 2022 ທີ່ແຂວງຫລວງພະບາງ

ອ່ານຕໍ່ໜ້າ 2



## ຄວາມໝາຍຄວາມສຳຄັນຂອງລັດຖະທຳມະນູນແຫ່ງຊາດ



ໃນວັນທີ 11 ສິງຫາ 2022 ທ່ານ ຄຳແພງ ວິລະພັນ ປະທານກຳມາທິການຍຸຕິທຳ ໄດ້ໃຫ້ສຳພາດກັບສື່ມວນຊົນ ຂອງສະພາແຫ່ງຊາດ ເນື່ອງໃນໂອກາດວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 31 ປີ (15 ສິງຫາ 1991-15 ສິງຫາ 2022) ເຊິ່ງທ່ານໄດ້ໃຫ້ຮູ້ວ່າ: ວັນລັດຖະທຳມະນູນແຫ່ງຊາດ ແຫ່ງ ສປປລາວ ໝາຍ

ອ່ານຕໍ່ໜ້າ 7

## ລະດົມຄວາມຄິດເຫັນໃສ່ຮ່າງປຶ້ມຄູ່ມື 2 ສະບັບ



(ສພຊ) ເພື່ອເຝິກອົບຮົມຮ່າງປຶ້ມຄູ່ມື 2 ສະບັບ ຂອງສະພາແຫ່ງຊາດ ໃຫ້ບັນດາສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ໃຫ້ມີຄວາມຮັບຮູ້ ແລະ ເຂົ້າໃຈບັນດາຮ່າງເນື້ອໃນຂອງປຶ້ມຄູ່ມືດັ່ງກ່າວຢ່າງກວ້າງຂວາງ ແລະ ເລິກເຊິ່ງ; ເພື່ອມອບຮ່າງປຶ້ມຄູ່ມືເຫລົ່ານັ້ນໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ

ອ່ານຕໍ່ໜ້າ 2

## ເລຂາທິການສະພາແຫ່ງຊາດ ຕ້ອນຮັບຜູ້ຕາງໜ້າອົງການຢູນິເຊັບ



ໜ້າ 2

## ມອບອຸປະກອນການຮຽນ ໃຫ້ໂຮງຮຽນ ສາມັນກົມນອນຊົນເຜົ່າແຂວງອຸດົມໄຊ



ໜ້າ 2



ໜ້າ 4



ໜ້າ 4




ໜ້າ 4



ໜ້າ 5



ໜ້າ 5



ໜ້າ 5

ຊົມເຊີຍວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 31 ປີ (15/8/1955-15/8/2022) ຢ່າງສຸດໃຈ!

## ປະທານ...

ຄືແບບພິເສດຖານສະຫາຍອ້າຍນ້ອງຂອງພັກ, ລັດ ແລະ ປະຊາຊົນ ຫວຽດນາມອ້າຍນ້ອງ ມາສູ່ພັກ, ລັດ ແລະ ປະຊາຊົນລາວບັນດາເຜົ່າພວກຂ້າພະເຈົ້າ; ຕີລາຄາສູງຕໍ່ຜົນສໍາເລັດຢ່າງຈົບງາມຂອງກອງປະຊຸມສານ 3 ປະເທດ ລາວ-ກໍາປູເຈຍ-ຫວຽດນາມ ຄັ້ງທີ VI ທີ່ໄດ້ຈັດຂຶ້ນຢູ່ທີ່ນະຄອນຫລວງວຽງຈັນ; ຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນສໍາເລັດການພົບປະສອງຝ່າຍ ລະຫວ່າງຄະນະຜູ້ແທນສານປະຊາຊົນສູງສຸດສອງປະເທດລາວ-ຫວຽດນາມ ແລະ ການເຂົ້າຮ່ວມພິທີໂຮມຊຸມນຸມສະເຫລີມສະຫລອງວັນສ້າງຕັ້ງສານປະຊາຊົນສູງສຸດ ແຫ່ງ ສປປລາວ ຄົບຮອບ 40 ປີ. ພ້ອມນັ້ນ, ສະຫາຍປະທານສະພາແຫ່ງຊາດ ຍັງໄດ້ອວຍພອນໃຫ້ການຢ້ຽມຢາມ ສປປລາວ ຂອງສະຫາຍ ພ້ອມດ້ວຍຄະນະ ໃນຄັ້ງນີ້ ຈົ່ງປະສົບຜົນສໍາເລັດອັນຈົບງາມ ເຊິ່ງເປັນການປະກອບສ່ວນອັນສໍາຄັນໃນການເພີ່ມພູນຄູນສ້າງສາຍພົວພັນມິດຕະພາບຍິ່ງໃຫຍ່ ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງລາວ-ຫວຽດນາມ ເວົ້າລວມ, ເວົ້າສະເພາະ ກໍຄືລະຫວ່າງສອງອົງການຕຸລາການລາວ-ຫວຽດນາມ ໃຫ້ເລິກເຊິ່ງຍິ່ງໆຂຶ້ນ.

ໃນຕອນທ້າຍ, ສະຫາຍ ຫງວຽນ ຮ່ວາ ບິ່ງ ໄດ້ສະແດງຄວາມຂອບໃຈຕໍ່ສະຫາຍປະທານສະພາແຫ່ງຊາດ ແຫ່ງ ສປປລາວ ທີ່ໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນ; ພ້ອມນັ້ນ, ໄດ້ລາຍງານໃຫ້ຮູ້ກ່ຽວກັບຈຸດປະສົງຂອງການມາຢ້ຽມຢາມ ສປປລາວ ກໍຄືນະຄອນຫລວງວຽງຈັນໃນຄັ້ງນີ້ ແລະ ຍັງໄດ້ລາຍງານກ່ຽວກັບຜົນສໍາເລັດຂອງກອງປະຊຸມສານບັນດາແຂວງທີ່ມີຊາຍແດນຕິດຈອດກັນ 3 ປະເທດ ສປປລາວ, ສສ.ຫວຽດນາມ ແລະ ຣາຊະອານາຈັກກໍາປູເຈຍ ຄັ້ງທີ VI ຕື່ມອີກ.

(ກົງທະນູຄໍາ ພິພັດເສລີ)

## ລະດົມ...

ສະມາຊິກສະພາປະຊາຊົນແຂວງ ທີ່ໄດ້ຮັບການເຝິກອົບຮົມແລ້ວນັ້ນ ນໍາໄປຈັດຕັ້ງປະຕິບັດທົດລອງ ແລະ ທາບທາມຄໍາຄິດຄໍາເຫັນນໍາປະຊາຊົນຢູ່ພາຍໃນເມືອງຂອງຕົນ ແລະ ສືບຕໍ່ນໍາມາປັບປຸງຮ່າງປຶ້ມຄູ່ມືໃຫ້ມີຄວາມໜັກແໜ້ນ, ຮັດກຸມ ແລະ ສົມບູນຂຶ້ນ.

ກອງປະຊຸມສໍາມະນາລະດົມຄວາມຄິດເຫັນໃສ່ຮ່າງປຶ້ມຄູ່ມື 2 ສະບັບ ຂອງສະພາແຫ່ງຊາດ ໄດ້ຈັດຂຶ້ນໃນວັນທີ 12 ສິງຫາຜ່ານມາ, ທີ່ເມືອງແປກ ແຂວງຊຽງຂວາງ ໂດຍການເປັນປະທານຂອງທ່ານ ສຸບັນ ສະວະບຸດ ປະທານກໍາມາທິການວຽກງານສະມາຊິກສະພາແຫ່ງຊາດ, ມີບັນດາຮອງປະທານຄະນະສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງແຂວງຊຽງຂວາງ ແລະ ແຂວງຜົ້ງສາລີ, ສະມາຊິກສະພາປະຊາຊົນຂັ້ນແຂວງປະຈໍາເຂດເລືອກຕັ້ງເມືອງ, ບັນດາທ່ານຊ່ຽວຊານສ້າງຮ່າງປຶ້ມຄູ່ມື ແລະ ບັນດາທ່ານຄະນະກົມ, ຕາງໜ້າອົງການເຣອວິຕັດ ແລະ ກອງເລຂາຊ່ວຍວຽກພ້ອມດ້ວຍແຂກຖືກເຊີນ.

ກອງປະຊຸມໄດ້ຮັບຟັງການສະເໜີຮ່າງປຶ້ມຄູ່ມືລົງພົບປະປະຊາຊົນຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ; ຮັບຟັງການສະເໜີຮ່າງປຶ້ມຄູ່ມືການພິຈາລະນາ ແລະ ແກ້ໄຂສາຍດ່ວນ ຈາກບັນດານັກວິທະຍາກອນ; ຈາກນັ້ນ, ກໍໄດ້ຜັດປ່ຽນກັນປະກອບຄໍາຄິດຄໍາເຫັນໃສ່ຮ່າງປຶ້ມຄູ່ມືດັ່ງກ່າວ ເພື່ອໃຫ້ມີເນື້ອໃນຄົບຖ້ວນ, ແທດເໝາະກັບການປະຕິບັດຕົວຈິງ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຈາກຄະນະເລຂາທິການສະພາແຫ່ງຊາດ ແລະ ອົງການເຣອວິຕັດ.

(ນາງ ກຸກກິກ ບຸດດາໄຊ)

## ເລຂາ...

(ສພຊ) ວັນທີ 9 ສິງຫາຜ່ານມາ, ທີ່ສະພາແຫ່ງຊາດ ນະຄອນຫລວງວຽງຈັນ, ທ່ານ ນາງ ປິ່ງຄໍາ ລາຊະສິມມາ ກໍາມະການຄະນະປະຈໍາ, ເລຂາທິການສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ດຣ. ນາງ ເພຍ ເຣເບລໂລ ບີຣໂຕ ຜູ້ຕາງໜ້າອົງການຢູນິເຊັບ ປະຈໍາ ສປປລາວ ເພື່ອປຶກສາຫາລືກ່ຽວກັບການຮ່ວມມືລະຫວ່າງ ອົງການຢູນິເຊັບ ແລະ ສະພາແຫ່ງຊາດ ເພື່ອສົ່ງເສີມສິດທິ ແລະ ສະຫວັດດີການຂອງເດັກນ້ອຍ ແລະ ແມ່ຍິງໃນ ສປປລາວ.

ໃນການເຂົ້າຢ້ຽມຂໍ່ານັບຄັ້ງນີ້, ທັງສອງຝ່າຍໄດ້ປຶກສາຫາລືກັນກ່ຽວກັບການສະໜັບສະໜູນ ແລະ ປະກອບສ່ວນຂອງອົງການຢູນິເຊັບເຂົ້າໃນວຽກງານພັດທະນາສັງຄົມຕ່າງໆ ເຊິ່ງກວມເອົາການຕອບໂຕ້ກັບພະຍາດໂຄວິດ-19, ການສຶກສາ, ສາທາລະນະສຸກ ແລະ ໂພຊະນາການ; ພ້ອມນັ້ນ, ໄດ້ປຶກສາຫາລືກ່ຽວກັບຜົນການຄົ້ນຄວ້າທີ່ໄດ້ຮັບຈາກການສະໜັບສະໜູນຂອງອົງການຢູນິເຊັບ ຈະສາມາດເສີມຂະຫຍາຍຄວາມສາມາດຂອງສະພາແຫ່ງຊາດ ໃນການຕິດຕາມ ແລະ ກວດກາການປະຕິບັດນິຕິບັນຍັດ ແລະ ນະໂຍບາຍຕ່າງໆ; ນອກນັ້ນ, ທັງສອງຝ່າຍຍັງໄດ້ປຶກສາຫາລືກັນກ່ຽວກັບໂຄງການໃຫ້ເງິນສົດອຸດໜູນແກ່ແມ່ຍິງຖືພາ ແລະ ເດັກກ່ອນໄວຮຽນ (Mother and Early Childhood Grant) ເຊິ່ງເປັນໂຄງການຊ່ວຍເຫລືອເງິນສົດໂດຍບໍ່ມີເງື່ອນໄຂ ທີ່ແນໃສ່ການສົ່ງເສີມສຸຂະພາບທີ່ດີສໍາລັບແມ່ຍິງ ແລະ ເດັກ ໃນບັນດາເມືອງທີ່ທຸກຍາກທີ່ສຸດໃນແຂວງສະຫວັນນະເຂດ ແລະ ອັດຕະປື. ພ້ອມດຽວກັນ, ກໍໄດ້ແລກປ່ຽນຂໍ້ມູນກ່ຽວກັບບັນດາງານຕ່າງໆທີ່ອົງການຢູນິເຊັບ ແລະ ສະພາແຫ່ງຊາດ ຈະໄດ້ດໍາເນີນການຮ່ວມໃນປີ 2022 ເຊັ່ນ: ການເຝິກອົບຮົມໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງຈາກບັນດາແຂວງພາກເໜືອ ແລະ ພາກໃຕ້ ກ່ຽວກັບການປົກປ້ອງດ້ານສັງຄົມ ແລະ ການວາງງົບປະມານທີ່ຕອບສະໜອງຕໍ່ຄວາມຕ້ອງການຂອງເດັກນ້ອຍ.

ທ່ານ ນາງ ປິ່ງຄໍາ ລາຊະສົມມາ ໄດ້ສະແດງຄວາມຂອບໃຈຕໍ່ອົງການຢູນິເຊັບ ສໍາລັບການສະໜັບສະໜູນຢ່າງຕໍ່ເນື່ອງແກ່ບັນດາເດັກນ້ອຍ ແລະ ແມ່ຍິງ ໃນ ສປປລາວ ແລະ ສະພາແຫ່ງຊາດ ແຫ່ງ ສປປລາວ ຫວັງວ່າຈະສາມາດສືບຕໍ່ຜັນຂະຫຍາຍການຮ່ວມມືກັບອົງການຢູນິເຊັບ ໃນອະນາຄົດໄດ້.

ທ່ານ ດຣ. ນາງ ເພຍເຣເບລໂລ ບີຣໂຕ ໄດ້ກ່າວວ່າ: ອົງການຢູນິເຊັບ ພ້ອມທີ່ຈະສືບຕໍ່ໃຫ້ການສະໜັບສະໜູນແກ່ລັດຖະບານ ແຫ່ງ ສປປລາວ ໃນການບັນລຸເປົ້າໝາຍທີ່ໄດ້ກໍານົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX ແລະ ເປົ້າໝາຍການພັດທະນາແບບຍືນຍົງ ແລະ ຫວັງເປັນຢ່າງຍິ່ງວ່າ ຈະສາມາດສືບຕໍ່ເຮັດວຽກຢ່າງໃກ້ຊິດກັບລັດຖະບານ ແຫ່ງ ສປປລາວ ພາຍໃຕ້ແຜນງານການຮ່ວມມື ລະຫວ່າງ ລັດຖະບານ ແຫ່ງ ສປປລາວ ແລະ ອົງການຢູນິເຊັບ ສົກປີ 2022-2026.

(ສົມນຶກ ແກ້ວໄຊຍະຈັກ)

## ມອບອຸປະກອນ...

(ສພຊ) ເນື່ອງໃນໂອກາດທີ່ທ່ານ ປອ. ນາງ ວິພາວັນ ພົມວິຫານ ພັນລະຍາທ່ານ ປອ. ໄຊສົມພອນ ພົມວິຫານ ກໍາມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ລົງຢ້ຽມຢາມ ແລະ ເຮັດວຽກຢູ່ແຂວງອຸດົມໄຊ ໃນຕອນເຊົ້າຂອງວັນທີ 15 ສິງຫາ 2022, ທ່ານ ປອ. ນາງ ວິພາວັນ ພົມວິຫານ ພ້ອມດ້ວຍຄະນະຈາກສະພາແຫ່ງຊາດ, ສະພາປະຊາຊົນແຂວງອຸດົມໄຊ ໄດ້ໄປຢ້ຽມຢາມໂຮງຮຽນສາມັນກິນນອນຊົນເຜົ່າ ແຂວງອຸດົມໄຊ, ໃຫ້ກຽດຕ້ອນຮັບໂດຍທ່ານ ສີວອນ ເພັງມີໄຊ ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາ, ທ່ານ ສົມຈັນ ພົນທະສິດ ຜູ້ອໍານວຍການໂຮງຮຽນ ພ້ອມດ້ວຍຄູອາຈານ ແລະ ນ້ອງນັກຮຽນ.

ໃນການຢ້ຽມຢາມຄັ້ງນີ້, ທ່ານໄດ້ນໍາເອົາວັດຖຸອຸປະກອນການຮຽນ, ເຄື່ອງມືກະສິກໍາ ແລະ ເງິນສົດ ລວມມູນຄ່າທັງໝົດ 30 ລ້ານກີບ ມອບໃຫ້ໂຮງຮຽນດັ່ງກ່າວ ເພື່ອຮັບໃຊ້ເຂົ້າໃນວຽກບໍລິຫານ-ຄຸ້ມຄອງໂຮງຮຽນທັງສົ່ງເສີມໄປຕາມ 3 ລັກສະນະ 5 ຫລັກມູນການສຶກສາ.

ໃນໂອກາດດັ່ງກ່າວ, ທ່ານກໍໄດ້ນໍາເອົາຄວາມອົບອຸ່ນ ແລະ ບາງເນື້ອໃນຈິດໃຈໂອ້ລົມຕໍ່ພະນັກງານ, ຄູອາຈານ ແລະ ໄປຢ້ຽມຊົມຫ້ອງວາງສະແດງເຄື່ອງນຸ່ງບັນດາເຜົ່າຂອງນ້ອງນັກຮຽນ.

## ເຝິກອົບຮົມ...

ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ ທັງເປັນປະທານກໍາມາທິການກົດໝາຍ ມີບັນດາຮອງປະທານກໍາມາທິການກົດໝາຍ; ຫົວໜ້າ-ຮອງຫົວໜ້າກົມຕິດຕາມກວດກາ, ໂຄສະນາ ແລະ ຕີຄວາມໝາຍກົດໝາຍ ແລະ ພະນັກງານ-ລັດຖະກອນສະພາປະຊາຊົນຂັ້ນແຂວງ 18 ແຂວງ ພ້ອມດ້ວຍແຂກຖືກເຊີນ.

ທັງນີ້, ເພື່ອໃຫ້ພະນັກງານ-ລັດຖະກອນຂອງກໍາມາທິການກົດໝາຍ ແລະ ສະພາປະຊາຊົນຂັ້ນແຂວງ ໄດ້ຮັບການເຝິກອົບຮົມກ່ຽວກັບວຽກງານໂຄສະນາເຜີຍແຜ່ລັດຖະທໍາມະນູນ, ກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ, ຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການ ໃນການປະຕິບັດໜ້າທີ່ວຽກງານຜ່ານການແລກປ່ຽນບົດຮຽນແລະຄໍາຄິດຄໍາເຫັນ ກັບກົມວິຊາການຂອງກະຊວງຍຸຕິທໍາ ແລະ ຊ່ຽວຊານຂອງແຜນງານເຊກາ ໃນວຽກງານໂຄສະນາເຜີຍແຜ່ກົດໝາຍ.

ກອງປະຊຸມ ໄດ້ຮັບຟັງທັກສະການໂຄສະນາເຜີຍແຜ່ກົດໝາຍທີ່ມີປະສິດທິພາບ ຈາກທ່ານຫົວໜ້າໂຄງການສ້າງລັດທີ່ປົກຄອງລັດດ້ວຍກົດໝາຍ ແລະ ສິດທິມະນຸດ (SO3) ແຜນງານເຊກາ; ຮັບຟັງບົດຮຽນຜົນສໍາເລັດ ແລະ ຄວາມຄືບໜ້າວຽກງານໂຄສະນາເຜີຍແຜ່ກົດໝາຍຂອງກົມໂຄສະນາເຜີຍແຜ່ກົດໝາຍ ກະຊວງຍຸຕິທໍາ ຈາກຫົວໜ້າກົມໂຄສະນາເຜີຍແຜ່ກົດໝາຍກະຊວງຍຸຕິທໍາ; ຮັບຟັງການບັນລະຍາຍບົດຮຽນກ່ຽວກັບການສື່ສານທີ່ມີປະສິດທິພາບ ແລະ ການໂຄສະນາເຜີຍແຜ່ກົດໝາຍໂດຍນໍາໃຊ້ເຄື່ອງມືສື່ສານ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ຈັດແບ່ງກຸ່ມຄົ້ນຄວ້າ ແລະ ສ້າງບົດໂຄສະນາເຜີຍແຜ່ກົດໝາຍ ໃຫ້ແທດເໝາະກັບການປະຕິບັດຕົວຈິງ.

ກອງປະຊຸມຄັ້ງນີ້, ໄດ້ຮັບການສະໜັບສະໜູນຈາກແຜນງານການມີສ່ວນຂອງປະຊາຊົນຕໍ່ວຽກງານການປົກຄອງທີ່ດີ ແລະ ການສ້າງລັດທີ່ປົກຄອງດ້ວຍກົດໝາຍ (ແຜນງານເຊກາ).

(ຂ່າວ: ກຸກກິກ ບຸດດາໄຊ ແລະ ພາບ: ກົງໃຈ ແສງອໍາພັນ)



# ຄະນະບໍລິຫານງານຊາວໜຸ່ມ ໄດ້ຮັບໃບຢັ້ງຢືນ



(ສພຊ) ເພື່ອຢັ້ງຢືນນາມມະຍົດ 4 ບຸກ ໃຫ້ຄະນະຊາວໜຸ່ມສະພາແຫ່ງຊາດ ທີ່ໄດ້ຮັບການຢັ້ງຢືນຈາກສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ໃນການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກ ຄື: ບຸກທະລຸດ້ານແນວຄິດ; ດ້ານເຝິກຝົນຫລໍ່ຫລອມ, ຮໍ່າຮຽນ; ດ້ານວຽກງານການຈັດຕັ້ງ; ດ້ານວິຊາຊີບ-ສ້າງວຽກເຮັດງານທໍາຢ່າງເປັນຮູບປະທໍາ. ໃນວັນທີ 10 ສິງຫາ 2022 ທີ່ສະພາແຫ່ງຊາດ ໄດ້ມີພິທີມອບໃບຢັ້ງຢືນ 4 ບຸກ ໃຫ້ຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ ໂດຍການເປັນປະທານຂອງສະຫາຍພອນແກ້ວ ຕົ້ນວໍລະຈິດ ກໍາມະການຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ເລຂາຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ; ເຂົ້າຮ່ວມມີສະຫາຍ ປອ. ລິນຄໍາ ດວງສະຫວັນ ກໍາມະການສໍາຮອງສູນກາງພັກ, ຄະນະປະຈໍາພັກສະພາແຫ່ງຊາດ, ຜູ້ຊີ້ນໍາວຽກງານອົງການຈັດຕັ້ງມະຫາຊົນ, ສະຫາຍ ມອນໄຊ ລາວມົວຊື່ງ ກໍາມະການສໍາຮອງສູນກາງພັກ, ເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ມີຄະນະບໍລິຫານງານຊາວໜຸ່ມ ສະພາແຫ່ງຊາດ, ສະມາຊິກຊາວໜຸ່ມພາຍໃນສະພາແຫ່ງຊາດເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ໄດ້ຮັບຟັງບົດລາຍງານການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກ; ຂໍ້ຕົກລົງຂອງຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ວ່າດ້ວຍການຮັບຮອງຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ ສະ ພາແຫ່ງຊາດ ເປັນຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ 4 ບຸກ; ຈາກນັ້ນ, ກໍໄດ້ມີການມອບ-ຮັບໃບຢັ້ງຢືນ 4 ບຸກ, ບັນດາເລຂາໜ່ວຍຊາວໜຸ່ມຮາກຖານພາຍໃນສະພາແຫ່ງຊາດ ຂຶ້ນຈັບມື ເພື່ອແຂ່ງຂັນ 4 ບຸກ.

ໂອກາດດັ່ງກ່າວ, ສະຫາຍ ປອ. ລິນຄໍາ ດວງສະຫວັນ ໄດ້ມີຄໍາເຫັນໂອ້ລົມວ່າ: ຕາງໜ້າໃຫ້ຄະນະບໍລິຫານງານພັກສະພາແຫ່ງຊາດ ຂໍສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ ທີ່ໄດ້ຮັບການຢັ້ງຢືນເປັນຄະນະຊາວໜຸ່ມ 4 ບຸກ ຈາກຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ. ຜ່ານການສຶກສາອົບຮົມການເມືອງ-ແນວຄິດ ໄດ້ເຮັດໃຫ້ຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ ກໍຄືສະມາຊິກຊາວໜຸ່ມ ສືບຕໍ່ມີຄວາມຮັບຮູ້ເຂົ້າໃຈຕໍ່ແນວທາງນະໂຍບາຍ, ມີຄວາມເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ, ມີຄວາມໜັກແໜ້ນທາງດ້ານການເມືອງ-ແນວຄິດ ແລະ ການຈັດຕັ້ງ; ມີສະຕິລະວັງຕົວ ແລະ ມີຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງເປັນຢ່າງດີ. ພ້ອມນັ້ນ, ສະຫາຍ ຍັງໄດ້ເນັ້ນໃຫ້ສືບຕໍ່ເພີ່ມຄວາມເອົາໃຈໃສ່ ບາງບັນຫາຄື: ເພີ່ມທະວີການສຶກສາອົບຮົມການເມືອງ-ແນວຄິດ ໃຫ້ສະມາຊິກຊາວໜຸ່ມ ໂດຍຈັດຕັ້ງການເຊື່ອມຊຶມນິຕິກໍາຂອງພັກ-ລັດ ແລະ ວຽກງານຊາວໜຸ່ມ ໃຫ້ເປັນປົກກະຕິມີເນື້ອໃນເລິກເຊິ່ງຕິດແທດກັບຕົວຈິງ; ເປັນເຈົ້າການຈັດຕັ້ງຜັນຂະຫຍາຍບັນດາມະຕິ, ຄໍາສັ່ງ, ນິຕິກໍາທີ່ກ່ຽວຂ້ອງ ເປັນແຜນການ, ແຜນງານ, ໂຄງການ ພ້ອມທັງຕິດຕາມ, ກວດກາ, ຊຸກຍູ້ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ແລະ ຂໍທິດຊີ້ນໍາຈາກຄະນະພັກສະພາແຫ່ງຊາດ ແລະ ຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດໃຫ້ເປັນປົກກະຕິ; ສ້າງຂະບວນການແຂ່ງຂັນປະຕິບັດວຽກງານວິຊາສະເພາະ ຕິດພັນກັບຂໍ້ແຂ່ງຂັນຮັກຊາດ ແລະ ພັດທະນາ ແລະ ຂໍ້ແຂ່ງຂັນ 4 ບຸກ ໂດຍການຈັດສໍາມະນາ, ປາຖະກະຖາ, ເວທີແລກປ່ຽນ ແລະ ອື່ນໆ ເປັນຂະບວນການຟົດຟື້ນ ແລະ ຕໍ່ເນື່ອງ ພ້ອມທັງສະຫລຸບຖອດຖອນບົດຮຽນເປັນປະຈໍາ; ເຝິກຝົນຫລໍ່ຫລອມຕົນເອງ ດ້ວຍການຄົ້ນຄວ້າເຊື່ອມຊຶມ ແລະ ຮໍ່າຮຽນເອົາຄຸນສົມບັດ, ສິນທໍາປະຕິວັດ, ຄວາມເປັນແບບຢ່າງຂອງການນໍາຊາວໜຸ່ມຮຸ່ນກ່ອນ ພ້ອມທັງເຝິກຝົນຈາກພຶດຕິກໍາຕົວຈິງ ຮຽນກັບທີ່ ແລະ ລົງຮາກຖານ ໃຫ້ເປັນຂະບວນຟົດຟື້ນ; ເພີ່ມທະວີການຕິດຕາມກວດກາເປັນປົກກະຕິ, ເອົາໃຈໃສ່ທາງສຽງປາກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນຖັນແຖວຊາວໜຸ່ມ ເພື່ອແກ້ໄຂໃຫ້ທັນເວລາ ລວມທັງການປະຕິບັດນະໂຍບາຍດ້ານຕ່າງໆ ແລະ ປົກປ້ອງຜົນປະໂຫຍດອັນຊອບທໍາຂອງສະມາຊິກຊາວໜຸ່ມ.

(ຂ່າວ: ກົງທະນູຄໍາ, ພາບ: ສຸພາວັນ)

## ທ່ານ ປອ...

(ສພຊ) ໃນວັນທີ 15 ສິງຫາ 2022 ທີ່ສະໂມສອນເມືອງປາກແບງ ແຂວງອຸດົມໄຊ, ທ່ານ ປອ.ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະຕິດຕາມຈາກສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງອຸດົມໄຊ ໄດ້ເຄື່ອນໄຫວພົບປະ ແລະ ໂອ້ລົມອຳນາດການປົກຄອງເມືອງປາກແບງ ໂດຍໄດ້ຮັບການຕ້ອນຮັບຈາກທ່ານ ຄຳສະພອນ ໄຊຍະວົງ ເຈົ້າເມືອງປາກແບງ ມີບັນດາທ່ານພະນັກງານ, ທະຫານ, ຕຳຫລວດ ແລະ ພໍ່ແມ່ປະຊາຊົນເຂົ້າຮ່ວມ.

ກອງປະຊຸມ ໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດແຜນພັດທະນາ 6 ເດືອນຕົ້ນປີ ເປັນຕົ້ນແມ່ນສະພາບລວມຂອງເມືອງ; ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບທີ່ຕິດພັນກັບການແກ້ໄຂປາກົດການຫຍໍ້ທໍ້; ສະພາບເສດຖະກິດ; ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ແລະ ຂໍ້ສະດວກຂໍ້ຫຍຸ້ງຍາກອຸປະສັກໃນການພັດທະນາເສດຖະກິດ-ສັງຄົມ ຈຳນວນໜຶ່ງ ພ້ອມທັງສະເໜີຂໍທຶນກໍ່ສ້າງເສັ້ນທາງໃນຕົວເມືອງ 12 ເສັ້ນ ມູນຄ່າລວມ 40 ຕື້ ອີງຕາມແຜນພັດທະນາເມືອງປາກແບງໃຫ້ກາຍເປັນເມືອງບໍລິການ ແລະ ການທ່ອງທ່ຽວ; ທຶນກໍ່ສ້າງທະລຸເສັ້ນທາງເຂົ້າບ້ານທີ່ບໍ່ມີເສັ້ນທາງລົດ 11 ບ້ານ ມູນຄ່າ 3 ຕື້ກີບ ແລະ ທຶນທະລຸຈັດສັນບ້ານ (ໂຮມ 2 ບ້ານເຂົ້າກັນ) ບ້ານຈອມແສນ ແລະ ບ້ານນ້ຳເຢັນ ແລະ ອື່ນໆ; ຈາກນັ້ນ, ທ່ານ ປອ. ໄຊສົມພອນ ພົມວິຫານ ກໍໄດ້ມີຄຳເຫັນໂອ້ລົມ ຊີ້ທິດເຍືອງທາງຕໍ່ກອງປະຊຸມ ແລະ ໄດ້ມອບເຄື່ອງຊ່ວຍເຫລືອຈຳນວນໜຶ່ງເຊິ່ງປະກອບມີ ຊຸດ PPE 3 ແກັດ, ຜ້າອັດປາກ-ອັດດັງ 2 ແກັດ, ເຈວລ້າງມື 5 ແກັດ ແລະ ເງິນສົດຈຳນວນຫນຶ່ງ ລວມມູນຄ່າທັງຫມົດ 13 ລ້ານກີບ ມອບໃຫ້ທ່ານເຈົ້າເມືອງໆປາກແບງ ເພື່ອນຳໄປແຈກຢາຍໃຫ້ພາກສ່ວນກ່ຽວຂ້ອງ.

ວັນທີ 16 ສິງຫາ 2022, ທີ່ຫ້ອງວ່າການປົກຄອງແຂວງອຸດົມໄຊ, ທ່ານ ປອ. ໄຊສົມພອນ ພົມວິຫານ ພ້ອມດ້ວຍຄະນະ ຍັງໄດ້ເຮັດວຽກຮ່ວມກັບອຳນາດການປົກຄອງແຂວງອຸດົມໄຊ ໂດຍການເຂົ້າຮ່ວມຂອງທ່ານ ບຸນຄົງ ຫລ້າຈຽມພອນ ກຳມະການສຳຮອງສູນກາງພັກ, ເຈົ້າແຂວງແຂວງອຸດົມໄຊ, ບັນດາທ່ານຮອງເຈົ້າແຂວງ, ຄະນະປະຈຳພັກແຂວງ, ບັນດາທ່ານສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 4, ສະມາຊິກສະພາປະຊາຊົນແຂວງ ແລະ ພະນັກງານຫລັກແຫລ່ງຈາກພະແນກການຕ່າງໆພາຍໃນແຂວງເຂົ້າຮ່ວມ; ຈາກນັ້ນ, ໄດ້ຮັບຟັງການລາຍງານໂດຍສັງເຂບກ່ຽວກັບສະພາບທີ່ພົ້ນເດັ່ນໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ຈາກທ່ານເຈົ້າແຂວງ; ຮັບຟັງການລາຍງານການເຄື່ອນໄຫວວຽກງານສະພາປະຊາຊົນແຂວງອຸດົມໄຊ ຈາກທ່ານປະທານສະພາປະຊາຊົນແຂວງ.

ໂອກາດດັ່ງກ່າວ, ທ່ານປະທານສະພາແຫ່ງຊາດ ໄດ້ມີຄຳເຫັນໂອ້ລົມວ່າ: ຜ່ານການຮັບຟັງລາຍງານເຫັນວ່າໃນໄລຍະຜ່ານມາ ໂດຍການນຳພາ-ຊີ້ນຳຂອງເລຂາພັກແຂວງ, ເຈົ້າແຂວງໆອຸດົມໄຊ, ຄວາມເປັນເອກະພາບຂອງຄະນະພັກແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ອົງການປົກຄອງແຂວງ ກໍຄືບັນດາຂະແໜງການ, ອົງການປົກຄອງທ້ອງຖິ່ນທຸກຂັ້ນ ລວມທັງປະຊາຊົນບັນດາເຜົ່າຂອງແຂວງອຸດົມໄຊ ເຮັດໃຫ້ການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມຄົບຄະນະ ຄັ້ງທີ 4 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI, ມະກອງປະຊຸມສະພາແຫ່ງຊາດ, ການຈັດຕັ້ງປະຕິບັດວາລະແຫ່ງຊາດ, ມະຕິກອງປະຊຸມໃຫຍ່ອົງຄະນະພັກແຂວງອຸດົມໄຊ, ມະຕິກອງປະຊຸມສະພາປະຊາຊົນແຂວງອຸດົມໄຊ ໄດ້ຮັບຜົນສຳເລັດຫລາຍດ້ານ, ສາມາດປະຄັບປະຄອງເສດຖະກິດ-ການເງິນຂອງແຂວງໃຫ້ສືບຕໍ່ມີບາດກ້າວຂະຫຍາຍຕົວໃນລະດັບໜຶ່ງ, ສັງຄົມມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ຊີວິດການເປັນຢູ່ຂອງປະຊາຊົນ ໄດ້ຮັບການຍົກລະດັບດີຂຶ້ນເປັນກ້າວໆ; ພ້ອມນັ້ນ, ທ່ານຍັງໄດ້ເນັ້ນໃຫ້ປັບປຸງລະບົບກົງຈັກການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການອຳນາດລັດຢູ່ແຂວງ ໃຫ້ມີປະສິດທິພາບ, ເຮັດໃຫ້ກົງຈັກກະທັດຮັດເປັນລະບົບໂລ່ງລ່ຽນ; ສະກັດກັ້ນການນຳໃຊ້ສິດ, ອຳນາດໃນທາງທີ່ບໍ່ຖືກກົດໝາຍຂອງເຈົ້າໜ້າທີ່ຂອງລັດທຸກຂັ້ນ; ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ປະຊາຊົນ ສາມາດເຂົ້າເຖິງຂະບວນການຍຸຕິທຳ ເຮັດໃຫ້ຄວາມເຊື່ອໝັ້ນຂອງປະຊາຊົນ ຕໍ່ພັກ-ລັດດີຂຶ້ນເລື້ອຍໆ. ສ້າງເງື່ອນໄຂໃຫ້ປະຊາຊົນບັນດາເຜົ່າ ສາມາດເຂົ້າຮ່ວມ, ປະກອບຄຳເຫັນ, ຕິດຕາມກວດກາການບໍລິຫານລັດ; ປະຊາຊົນໄດ້ຮັບຮູ້ການເຄື່ອນໄຫວຂອງສະມາຊິກສະພາປະຊາຊົນຂັ້ນແຂວງທີ່ເປັນຕົວແທນຂອງຕົນ; ກ່ຽວກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ກໍຄືວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ວາລະແຫ່ງຊາດ ກ່ຽວກັບການແກ້ໄຂບັນຫາຢາເສບຕິດ ແມ່ນໃຫ້ເພີ່ມທະວີການໂຄສະນາເຜີຍແຜ່ຢ່າງກວ້າງຂວາງ ແລະ ຖືເອົາວາລະແຫ່ງຊາດ ເປັນພາລະກິດທົ່ວປວງຊົນ ເຊິ່ງສະມາຊິກພັກ, ພະນັກງານ-ລັດຖະກອນ ກໍຄື ພໍ່ແມ່ປະຊາຊົນບັນດາເຜົ່າ ຈະຕ້ອງໄດ້ຮ່ວມແຮງຮ່ວມໃຈກັນຈັດຕັ້ງປະຕິບັດ; ພ້ອມນັ້ນ, ການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງອຸດົມໄຊ ໃນໄລຍະຜ່ານມາກໍມີຜົນສຳເລັດຫລາຍດ້ານ ແລະ ສາມາດສ້າງປະສົບປະການນັບມື້ດີຂຶ້ນ. ເຖິງແນວໃດກໍຕາມ ເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງວຽກງານໃນຕໍ່ໜ້າ ສະເໜີໃຫ້ຄະນະພັກແຂວງອຸດົມໄຊ ເພີ່ມທະວີຄວາມເອົາໃຈໃສ່ນຳພາການປະຕິບັດໜ້າທີ່ຂອງສະພາປະຊາຊົນແຂວງ ເຮັດໃຫ້ການເປັນອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າພາຍໃນແຂວງ ມີຄຸນນະພາບ ແລະ ປະສິດທິຜົນສູງຂຶ້ນ ໂດຍສະເພາະການກະກຽມເນື້ອໃນກອງປະຊຸມສະໄໝສາມັນຂອງສະພາປະຊາຊົນແຂວງ ເພື່ອພິຈາລະນາຮັບຮອງເອົາບັນຫາສຳຄັນຂອງແຂວງ, ການພິຈາລະນາຮັບຮອງນິຕິກຳທີ່ສຳຄັນຂອງແຂວງ ລວມທັງການເຄື່ອນໄຫວຕິດຕາມກວດກາຂອງສະພາປະຊາຊົນແຂວງອຸດົມໄຊ ເຊິ່ງຈະເປັນຂໍ້ມູນໃຫ້ແກ່ຄະນະພັກແຂວງໃນການປັບປຸງແກ້ໄຂບັນຫາຕ່າງໆໄດ້ຢ່າງຖືກຕ້ອງ; ສະເໜີໃຫ້ຄະນະພັກ, ອົງການປົກຄອງແຂວງ ເພີ່ມທະວີການນຳພາຊີ້ນຳຂະແໜງການກ່ຽວຂ້ອງຂອງແຂວງ ໃນການສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການປັບປຸງກົງຈັກຊ່ວຍວຽກຂັ້ນຂະແໜງການຂອງສະພາປະຊາຊົນແຂວງ ລວມທັງບຸກຄະລາກອນ ໃຫ້ສາມາດຮັບປະກັນການປະຕິບັດໜ້າທີ່ການເມືອງໄດ້ຮັບຜົນສຳເລັດ ລວມທັງການຍົກສູງບົດບາດການເຄື່ອນໄຫວວຽກງານ ຂອງສະມາຊິກສະພາປະຊາຊົນແຂວງ ທີ່ປະຈຳຢູ່ເມືອງ ໃຫ້ນັບມື້ດີຂຶ້ນ. ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ເປັນອົງການຈັດຕັ້ງທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ ແລະ ປະຕິບັດໜ້າທີ່ວຽກງານຢູ່ທ້ອງຖິ່ນ ເພື່ອເຮັດໃຫ້ການປະຕິບັດໜ້າທີ່ຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ໄດ້ຮັບຜົນສຳເລັດດ້ວຍປະສິດທິຜົນສູງນັ້ນ ຈະຕ້ອງໄດ້ເອົາໃຈໃສ່ເກັບກຳ, ສັງລວມເອົາບັນຫາຕ່າງໆ ກ່ຽວກັບການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມຂອງທ້ອງຖິ່ນ ນຳໄປສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ ເພື່ອພິຈາລະນາ, ຊອກຫາວິທີການແກ້ໄຂ. ພາຍຫລັງກອງປະຊຸມສະພາແຫ່ງຊາດ ຕົກລົງເປັນມະຕິກອງປະຊຸມສະພາແຫ່ງຊາດແລ້ວ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ກໍນຳເອົາການຕົກລົງຂອງສະພາແຫ່ງຊາດ ມາລາຍງານຕໍ່ຄະນະພັກແຂວງ, ປະສານສົມທົບກັບສະພາປະຊາຊົນແຂວງ, ອົງການປົກຄອງແຂວງ ຈັດຕັ້ງຜັນຂະຫຍາຍ ລວມທັງຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນສຳເລັດ.

(ສອນສັກ ວັນວິໄຊ)




# ສພຂ ຫລວງນ້ຳທາ ສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3



(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງ (ສພຂ) ຫລວງນ້ຳທາ ຊຸດທີ II ໄດ້ສຳເລັດລົງຢ່າງເປັນທາງການໃນວັນທີ 4 ສິງຫາຜ່ານມາ, ໂດຍການເປັນປະທານຂອງທ່ານ ຄຳຟອງ ອິນມານີ ຮອງເລຂາພັກແຂວງ ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີທ່ານ ຄຳໄຫລ ສີປະເສີດ ເລຂາຄະນະບໍລິຫານງານພັກແຂວງ, ເຈົ້າແຂວງໆຫລວງນ້ຳທາ, ທ່ານ ພົນຕີ ວົງສັກ ພົມທະວົງ ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ ທັງເປັນສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ ແລະ ທ່ານ ພົວ. ວັນທອນ ສຸລິສັກ ຮອງຫົວໜ້າກົມໃຫຍ່ສັນຕິບານກະຊວງປ້ອງກັນຄວາມສະຫງົບ ທັງເປັນ ສສຊ ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ (ສສຂ), ອົງການແນວລາວສ້າງຊາດແຂວງ, ບັນດາທ່ານການນຳພັກ-ລັດ, ອາດີດການນຳຂອງແຂວງ, ອາດີດສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ບັນດາທ່ານນັກປະຕິວັດອາວຸໂສ, ຜູ້ຊົງຄຸນວຸດທິ, ບັນດາທ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, 2 ກອງບັນຊາການຂອງແຂວງ, ພະແນກການອົງການທຽບເທົ່າ ແລະ ບັນດາທ່ານແຂກຖືກເຊີນເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຊຸດທີ II ໄດ້ດຳເນີນມາເປັນເວລາ 3 ວັນເຕັມ ເຊິ່ງບັນດາທ່ານ ສສຂ ໄດ້ຍົກສູງຄວາມຮັບຜິດຊອບຂອງຕົນ ເຂົ້າໃນການຄົ້ນຄວ້າ, ພິຈາລະນາ, ຮັບຮອງເອົາບັນຫາສຳຄັນຕ່າງໆຄື: ໄດ້ພິຈາລະນາ ແລະ ຮັບຮອງເອົາການສະເໜີແຕ່ງຕັ້ງ, ບັນດາຫົວໜ້າພະແນກຂັ້ນແຂວງ ຈຳນວນ 6 ທ່ານ ຕາມການສະເໜີຂອງທ່ານເຈົ້າແຂວງໆຫລວງນ້ຳທາ ແລະ ໄດ້ພິຈາລະນາຮັບຮອງເອົາການສະເໜີແຕ່ງຕັ້ງຫົວໜ້າອົງການໄອຍະການປະຊາຊົນແຂວງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນແຂວງ; ໄດ້ພິຈາລະນາ ແລະ ຮັບຮອງເອົາ ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ປະຈຳຫົກເດືອນຕົ້ນປີ ແລະ ແຜນການປະຈຳຫົກເດືອນທ້າຍປີ 2022; ໄດ້ພິຈາລະນາ ແລະ ຮັບຮອງເອົາ ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຄຸ້ມຄອງລາຄາສິນຄ້າ ແລະ ການຄຸ້ມຄອງບັນດາປ້ຳນ້ຳມັນ ຢູ່ພາຍໃນແຂວງຫລວງນ້ຳທາ; ໄດ້ຮັບຟັງການລາຍງານຂອງຄະນະສະເພາະກິດຂັ້ນແຂວງ ກ່ຽວກັບສະພາບການຕ້ານ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19 ຕິດພັນກັບການຄຸ້ມຄອງ ແລະ ການນຳສົ່ງຄົນຕ່າງປະເທດທີ່ເຂົ້າມາແຂວງຫລວງນ້ຳທາເຂົ້າສູນເພື່ອລໍຖ້າກັບຄືນປະເທດ; ໄດ້ພິຈາລະນາ ແລະ ຮັບຮອງເອົາ ບົດລາຍງານຂອງຄະນະປະຈຳສະພາປະຊາຊົນແຂວງ ກ່ຽວກັບເຄື່ອນໄຫວວຽກງານ ໃນໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 2 ຫາກອງປະຊຸມສະໄໝສາມັນເທື່ອທີ 3 ແລະ ແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ ສພຂ ຊຸດທີ II; ພິຈາລະນາ ແລະ ຮັບຮອງເອົານິຕິກຳໃຕ້ກົດໝາຍຂອງແຂວງ ສ້າງໃໝ່ຈຳນວນ 2 ສະບັບຄື: ຮ່າງຂໍ້ຕົກລົງຂອງເຈົ້າແຂວງວ່າດ້ວຍການຄຸ້ມຄອງນ້ຳ, ຊັບພະຍາກອນນ້ຳ ແລະ ດິນບໍລິເວນແຄມນ້ຳ; ຮ່າງຂໍ້ຕົກລົງຂອງເຈົ້າແຂວງວ່າດ້ວຍ ການຄຸ້ມຄອງສິ່ງເສດເຫລືອ.

ພ້ອມນັ້ນ, ກອງປະຊຸມຍັງໄດ້ຮັບຟັງການຊີ້ແຈງຕໍ່ຄຳເຫັນ, ຄຳຊັກຖາມ ຂອງບັນດາທ່ານ ສສຊ ປະຈຳເຂດເລືອກຕັ້ງ, ສສຂ ກໍຄືຄຳຄິດເຫັນທີ່ພົບຄວາມຫຍຸ້ງຍາກ, ຄວາມສົນໃຈ ຂອງພໍ່ແມ່ປະຊາຊົນບັນດາເຜົ່າໃນທົ່ວແຂວງ ເພື່ອໃຫ້ພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າ, ແກ້ໄຂໃຫ້ດີກວ່າເກົ່າ.

# ພັດທະນາລະບົບ ການລົງຄະແນນສຽງແບບເອເລັກໂຕຣນິກ



(ສພຊ) ເມື່ອຕົ້ນເດືອນສິງຫາ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອຸດົມໄຊ ໄດ້ທົດລອງນຳໃຊ້ລະບົບການລົງຄະແນນສຽງແບບເອເລັກໂຕຣນິກ ພາຍໃຕ້ການເປັນປະທານທ່ານ ຄຳດີ ວົງລ້ອມ ປະທານສະພາປະຊາຊົນແຂວງອຸດົມໄຊ, ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ ອ້ອມຂ້າງ ແລະ ຄະນະຮັບຜິດຊອບຈາກພະແນກເຕັກໂນໂລຊີ ແລະ ການສື່ສານແຂວງເຂົ້າຮ່ວມຢ່າງພ້ອມພຽງ.

ການພັດທະນາລະບົບດັ່ງກ່າວ ແມ່ນໄດ້ຮັບການສະໜັບສະໜູນຈາກພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ ຮ່ວມກັບສະພາປະຊາຊົນແຂວງອຸດົມໄຊ ເພື່ອຮອງຮັບການລົງຄະແນນສຽງຮັບຮອງເອົາບັນດານິຕິກຳ ຂອງສະມາຊິກສະພາປະຊາຊົນແຂວງ ໃນກອງປະຊຸມສະພາປະຊາຊົນແຂວງ ໃນແຕ່ລະຄັ້ງ ໃຫ້ມີຄຸນນະພາບ, ມີຄວາມສະດວກ ແລະ ວ່ອງໄວ ເຊິ່ງໄດ້ເລີ່ມນຳໃຊ້ເປັນຄັ້ງທຳອິດ ຢູ່ໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງອຸດົມໄຊ ຊຸດທີ II ທີ່ດຳເນີນຂຶ້ນໃນລະຫວ່າງວັນທີ 9-10 ສິງຫາ 2022.

(ນັກຂ່າວ ສພຂ ອຸດົມໄຊ)

# ຄວສຜ ຫລວງພະບາງ ຕິດຕາມກວດກາ ແລະ ຊຸກຍູ້ວຽກງານ




(ສພຊ) ໃນວັນທີ 1 ສິງຫາ 2022 ທ່ານ ປອ. ກໍລະກັນ ພົມມະວົງ ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ (ຄວສຜ), ທ່ານ ສຸວິລັດ ພັນສຸເດດ ຮອງປະທານ ຄວສຜ ພ້ອມດ້ວຍທີມງານ ໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ວຽກງານ ປະຈຳ 6 ເດືອນຕົ້ນປີ 2022 ຢູ່ນະຄອນຫລວງພະບາງ.

ການເຄື່ອນໄຫວໃນຄັ້ງນີ້, ກໍເພື່ອເປັນການຕາມກົດໝາຍວ່າດ້ວຍການຕິດຕາມກວດກາຂອງຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ (ສະບັບປັບປຸງ) ສະບັບເລກທີ 12/ສພຊ, ລົງວັນທີ 15 ພະຈິກ 2016, ມະຕິຕົກລົງຂອງຄະນະປະຈຳສະພາປະຊາຊົນແຂວງຫລວງພະບາງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄວສຜ ເລກທີ 164/ຄປຈ, ລົງວັນທີ 31 ສິງຫາ 2021 ແລະ ແຜນການເຄື່ອນໄຫວວຽກງານຕິດຕາມກວດກາ ປະຈຳ 6 ເດືອນຕົ້ນປີ 2022 ຂອງຄະນະປະຈຳສະພາປະຊາຊົນແຂວງ ສະບັບທີ 31/ຄປຈ, ລົງວັນທີ 6 ພຶດສະພາ 2022 ໂດຍສະເພາະຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ປະຈຳ 6 ເດືອນຕົ້ນປີ 2022 ຕາມມະຕິກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາປະຊາຊົນແຂວງ ໄດ້ຮັບຮອງເອົາໂດຍສະເພາະແມ່ນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ທີ່ຕິດພັນກັບ 2 ວາລະແຫ່ງຊາດ.

ໂອກາດດັ່ງກ່າວ, ໄດ້ຮັບຟັງການລາຍງານສະພາບລວມໂດຍຫຍໍ້ ຈາກຮອງເຈົ້ານະຄອນຫລວງພະບາງ ແລະ ໄດ້ຮັບຟັງການຊີ້ແຈງບາງບັນຫາຕາມຄຳຖາມເຈາະຈີ້ມ ທີ່ຄະນະກຳມະການດັ່ງກ່າວ ໄດ້ສົ່ງໃຫ້ກ່ອນໜ້ານັ້ນ ຈາກຜູ້ຕາງໜ້າບັນດາຫ້ອງທີ່ກ່ຽວຂ້ອງຂອງນະຄອນ ເຊິ່ງປະກອບມີຂົງເຂດເສດຖະກິດ, ແຜນການ ແລະ ການເງິນ, ຂົງເຂດວັດທະນະທຳ-ສັງຄົມ ແລະ ຂົງເຂດຕຸລາການ.

ໃນຕອນທ້າຍ, ຄະນະຍັງໄດ້ເນັ້ນໃຫ້ບັນດາຂົງເຂດວຽກງານຂອງນະຄອນຫລວງພະບາງ ຈົ່ງພ້ອມກັນສຸມໃສ່ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳ 6 ເດືອນທ້າຍປີ 2022 ທີ່ນະຄອນ ໄດ້ກຳນົດໄວ້ ແລະ ບັນດາຄາດໝາຍຕ່າງໆ ໃຫ້ບັນລຸຕາມຈຸດປະສົງ ແລະ ເປົ້າໝາຍທີ່ວາງໄວ້; ໃຫ້ສືບຕໍ່ປົກປັກຮັກສາ ແລະ ຄຸ້ມຄອງນະຄອນຫລວງພະບາງ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ ແລະ ສ້າງຄວາມປະທັບໃຈໃຫ້ແກ່ແຂກຕ່າງດ້າວ, ທ້າວຕ່າງແດນ ທີ່ເຂົ້າມາທ່ຽວຊົມພາຍໃນນະຄອນຫລວງພະບາງ ມາແລ້ວຢາກມາອີກຕໍ່ໆໄປ.

(ເພັດສະໝອນ ທຳມຸງຄຸນ)

# ຖະແຫລງການດຳເນີນກອງປະຊຸມ ສະໄໝສາມັນເທື່ອທີ 3 ຂອງ ສພຂ ຜົ້ງສາລີ

(ສພຊ) ຕອນເຊົ້າວັນທີ 15 ສິງຫາ 2022 ທີ່ຫ້ອງຄະນະປະຈຳສະພາປະຊາຊົນແຂວງ (ສພຂ) ຜົ້ງສາລີ, ທ່ານ ພອນສະຫວັນ ສັກຕິຄຸນ ເລຂາທິການ ສພຂ ຜົ້ງສາລີ, ຫົວໜ້າກອງເລຂາກອງປະຊຸມ ໄດ້ຖະແຫລງການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຜົ້ງສາລີ ຊຸດທີ II ທ່ານໄດ້ກ່າວວ່າ: ປະຕິບັດຕາມລັດຖະທຳມະນູນ ມາດຕາ 80, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ມາດຕາ 60 ແລະ ມະຕິຂອງຄະນະປະຈຳ ສພຂ ສະບັບເລກທີ 399/ຄປຈຂ, ລົງວັນທີ 8 ສິງຫາ 2022 ວ່າດ້ວຍການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຊຸດທີ II ຈະໄດ້ໄຂຂຶ້ນໃນລະຫວ່າງວັນທີ 23-25 ສິງຫາ 2022 ທີ່ຫ້ອງປະຊຸມ ສພຂ ເມືອງບຸນເໜືອ ແຂວງຜົ້ງສາລີ ເຊິ່ງຈະໃຊ້ເວລາດຳເນີນກອງປະຊຸມທັງໝົດ 3 ວັນ ແລະ ຈະໄດ້ສຸມໃສ່ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງແຂວງ ຄື:

**+ວຽກງານຂອງອົງການປົກຄອງແຂວງ:** ບົດລາຍງານໂດຍສັງເຂບຂອງເຈົ້າແຂວງກ່ຽວກັບສະພາບພົ້ນເດັ່ນໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2022; ບົດລາຍງານຂອງອົງການປົກຄອງແຂວງກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2022; ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດ ແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2022; ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດ ວາລະແຫ່ງຊາດ ຕໍ່ກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໃນໄລຍະທີ 1 ແລະ ໄລຍະ 2 ພາຍໃນແຂວງ; ຮັບຟັງການລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດ ວາລະແຫ່ງຊາດຕໍ່ກັບການ ແກ້ໄຂບັນຫາຢາເສບຕິດ ໃນໄລຍະທີ 1 ແລະ ການຈັດຕັ້ງປະຕິບັດໄລຍະ 2 ພາຍໃນແຂວງ; ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບ ການປັບປຸງຄຸນນະພາບລະບົບການຮຽນ-ການສອນ ໃນທຸກຊັ້ນທຸກສາຍໃນໄລຍະໃໝ່; ບົດລາຍງານສະເໜີການຮ່າງ ແລະ ປັບປຸງນິຕິກຳຮ່າງນິຕິກຳໃຕ້ກົດໝາຍ ຈຳນວນ 4 ສະບັບຄື: ສ້າງໃໝ່ 3 ສະບັບ: ຂໍ້ຕົກລົງເຈົ້າແຂວງ ວ່າດ້ວຍການສ້າງກອງທຶນພັດທະນາກິລາກາຍຍະກຳຂອງແຂວງ; ຂໍ້ຕົກລົງເຈົ້າແຂວງ ວ່າດ້ວຍການກຳນົດຫົວໜ່ວຍລາຄາສິ່ງປຸກສ້າງ, ພືດອຸດສາຫະກຳ ແລະ ພືດກະສິກຳ ເພື່ອຊົດເຊີຍແກ່ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບໂດຍກົງຈາກໂຄງການພັດທະນາພື້ນຖານໂຄງລ່າງຢູ່ແຂວງຜົ້ງສາລີ ແລະ ຂໍ້ຕົກລົງເຈົ້າແຂວງ ວ່າດ້ວຍການຈັດງານບຸນປະເພນີ ຢູ່ແຂວງຜົ້ງສາລີ; ສະບັບປັບປຸງ 1 ສະບັບ: ຂໍ້ຕົກລົງເຈົ້າແຂວງ ວ່າດ້ວຍການເພີ່ມທະວີໃນການສະກັດກັ້ນຕ້ານ ແລະ ແກ້ໄຂຢາເສບຕິດ ຢູ່ແຂວງຜົ້ງສາລີ.

**+ວຽກງານຂອງອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ:** ບົດລາຍງານຜົນການການຕິດຕາມກວດກາຂອງອົງການສືບສວນ-ສອບສວນ ກ່ຽວກັບການນຳໃຊ້ 7 ມາດຕະການສະກັດກັ້ນ ຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ; ບົດລາຍງານຜົນການຈັດຕັ້ງປະຕິບັດ ການພິຈາລະນາຄຳຕັດສິນຄະດີດ້ວຍຜູ້ພິພາກສາຜູ້ດຽວ.

**+ ວຽກງານຂອງ ສພຂ:** ບົດລາຍງານການເຄື່ອນໄຫວວຽກງານໃນໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 2 ຫາເທື່ອທີ 3 ຂອງ ສພຂ ແລະ ແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ ສພຂ ຊຸດທີ II; ບົດປະກອບຄຳເຫັນຂອງຄະນະປະຈຳ ສພຂ ຕໍ່ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂັ້ນແຂວງ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການປະຈຳ 6 ເດືອນທ້າຍປີ 2022; ບົດປະກອບຄຳເຫັນຂອງຄະນະປະຈຳ ສພຂ ຕໍ່ກັບບົດລາຍງານການປັບປຸງຄຸນນະພາບລະບົບການຮຽນ-ການສອນໃນທຸກຊັ້ນທຸກສາຍໃນໄລຍະໃໝ່ ຂອງພະແນກສຶກສາທິການ ແລະ ກິລາແຂວງ; ບົດປະກອບຄຳເຫັນຂອງຄະນະປະຈຳ ສພຂ ກ່ຽວກັບຜົນການການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ ກ່ຽວກັບການນຳໃຊ້ 7 ມາດຕະການສະກັດກັ້ນ ຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ຜົນການຈັດຕັ້ງປະຕິບັດ ການພິຈາລະນາຄຳຕັດສິນຄະດີດ້ວຍຜູ້ພິພາກສາຜູ້ດຽວ ຂອງອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ; ບົດປະກອບຄຳເຫັນຂອງຄະນະປະຈຳ ສພຂ ຕໍ່ກັບບົດລາຍງານຂອງ ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ຕໍ່ກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໃນໄລຍະທີ 1 ແລະ ໄລຍະ 2 ພາຍໃນແຂວງ; ບົດປະກອບຄຳເຫັນຂອງຄະນະປະຈຳ ສພຂ ຕໍ່ກັບບົດລາຍງານຂອງບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ຕໍ່ກັບການແກ້ໄຂບັນຫາຢາເສບຕິດ ໃນໄລຍະທີ 1 ແລະ ໄລຍະ 2 ພາຍໃນແຂວງ.



ນອກຈາກນີ້, ຍັງຈະໄດ້ຮັບຟັງການຊີ້ແຈງຈາກພະແນກການທີ່ກ່ຽວຂ້ອງຕໍ່ກັບການແກ້ໄຂບັນຫາຕ່າງໆຂອງອົງການບໍລິຫານລັດ ທີ່ສັງຄົມໃຫ້ຄວາມສົນໃຈ ແລະ ບັນຫາທ່າງສຽງໃນສັງຄົມ. ພ້ອມກັນນັ້ນ, ຍັງຈະໄດ້ຮັບຟັງການປະກອບຄຳເຫັນຂອງອົງການແນວລາວສ້າງຊາດແຂວງ ຕໍ່ກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານໃນໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 2 ຫາເທື່ອທີ 3 ແລະ ແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ ສພຂ ຊຸດທີ II.

ກອງປະຊຸມຄັ້ງນີ້ ຍັງຈະພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງແຂວງ ລວມມີ 9 ມະຕິ ຄື: ວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນ ແລະ ແຜນການ 6 ເດືອນທ້າຍປີ 2022; ວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນ ແລະ ແຜນການ 6 ເດືອນທ້າຍປີ 2022; ວ່າດ້ວຍການຮັບຮອງເອົາບົດລາຍງານຜົນການຕິດຕາມກວດກາ ການປັບປຸງຄຸນນະພາບລະບົບການຮຽນ-ການສອນ ໃນທຸກຊັ້ນທຸກສາຍໃນໄລຍະໃໝ່ຂອງພະແນກສຶກສາທິການ ແລະ ກິລາ ແຂວງ; ວ່າດ້ວຍການຮັບຮອງເອົາບົດລາຍງານຂອງຄະນະປະຈຳສະພາ ສພຂ ກ່ຽວກັບການເຄື່ອນໄຫວວຽກງານ ໃນໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 2 ຫາກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຊຸດທີ II; ວ່າດ້ວຍການຮັບຮອງເອົາ ຂໍ້ຕົກລົງເຈົ້າແຂວງ ວ່າດ້ວຍການສະກັດກັ້ນຕ້ານ ແລະ ແກ້ໄຂບັນຫາຢາເສບຕິດ ຢູ່ແຂວງຜົ້ງສາລີ; ວ່າດ້ວຍການຮັບຮອງເອົາ ຂໍ້ຕົກລົງເຈົ້າແຂວງ ວ່າດ້ວຍການສ້າງກອງທຶນພັດທະນາກິລາກາຍຍະກຳຂອງແຂວງ; ວ່າດ້ວຍການຮັບຮອງເອົາ ຂໍ້ຕົກລົງເຈົ້າແຂວງ ວ່າດ້ວຍການກຳນົດຫົວໜ່ວຍລາຄາສິ່ງປຸກສ້າງ, ພືດອຸດສາຫະກຳ ແລະ ພືດກະສິກຳ ເພື່ອຊົດເຊີຍແກ່ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບໂດຍກົງຈາກໂຄງການພັດທະນາພື້ນຖານໂຄງລ່າງຢູ່ແຂວງຜົ້ງສາລີ; ວ່າດ້ວຍການຮັບຮອງເອົາ ຂໍ້ຕົກລົງເຈົ້າແຂວງ ວ່າດ້ວຍການຈັດງານບຸນປະເພນີ ຢູ່ແຂວງຜົ້ງສາລີ; ວ່າດ້ວຍການຮັບຮອງເອົາການສະເໜີຍົກຍ້າຍ, ແຕ່ງຕັ້ງບຸກຄະລາກອນຂອງອົງການປົກແຂວງ ຜົ້ງສາລີ ຈຳນວນໜຶ່ງ.

ໃນນາມຕາງໜ້າໃຫ້ຄະນະປະຈຳ ສພຂ ແລະ ຄະນະເລຂາທິການ ສພຂ, ທ່ານ ພອນສະຫວັນ ສັກຕິຄຸນ ໄດ້ເຊີນຊວນບັນດາທ່ານພະນັກງານ-ລັດຖະກອນ, ທະຫານ, ຕຳຫລວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງ, ປະຊາຊົນບັນດາເຜົ່າທຸກຊັ້ນຄົນໃນທົ່ວແຂວງຜົ້ງສາລີ ຈົ່ງຕິດຕາມການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຊຸດທີ II ໃນຄັ້ງນີ້ດ້ວຍ ແລະ ໃນໄລຍະດຳເນີນກອງປະຊຸມ, ຄະນະເລຂາທິການ ສພຂ ໄດ້ຈັດຕັ້ງໜ່ວຍງານຮັບຜິດຊອບໂທລະສັບສາຍດ່ວນ ເພື່ອຮັບເອົາຄຳຄິດຄຳເຫັນ ແລະ ຄຳສະເໜີໂດຍກົງຈາກປະຊາຊົນທີ່ມີຕໍ່ການບໍລິຫານວຽກງານ ຂອງອົງການບໍລິຫານລັດ ໂດຍຜ່ານໂທລະສັບສາຍດ່ວນທີ່ບໍ່ເສຍຄ່າໃນໂມງລັດຖະການ ຕາມໝາຍເລກ ໂທລະສັບສາຍດ່ວນ 088 156 ຫລື ແຟັກ ໝາຍເລກ 088 210 102.

# ປະທານ ສພຂ ບໍລິຄໍາໄຊ ຕ້ອນຮັບຄະນະຜູ້ແທນ ສພຂ ຮ່າຕິ້ງ



(ສພຊ) ໃນຕອນເຊົ້າຂອງວັນທີ 3 ສິງຫາ 2022 ທີ່ສະພາປະຊາຊົນແຂວງ (ສພຂ) ບໍລິຄໍາໄຊ, ສະຫາຍ ປອ. ສຸວັນນີ ໄຊຊະນະ ຮອງເລຂາພັກແຂວງ, ປະທານ ສພຂ ບໍລິຄໍາໄຊ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງສະຫາຍ ເຈິ່ນວັນກີ່, ກໍາມະການພັກແຂວງ, ຮອງປະທານ ສພຂ ຮ່າຕິ້ງ ພ້ອມດ້ວຍຄະນະ ໃນທ່າມກາງບັນຍາກາດທີ່ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ ພວມສະເຫລີມສະຫລອງສອງວັນປະຫວັດສາດຂອງສອງຊາດ, ວັນສ້າງຕັ້ງສາຍພົວພັນການທູດ ລະຫວ່າງ ລາວ-ຫວຽດນາມ ຄົບຮອບ 60 ປີ ແລະ ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມືລາວ-ຫວຽດນາມ ຄົບຮອບ 45 ປີ ທັງເປັນປີສາມັກຄີມິດຕະພາບລາວ-ຫວຽດນາມ.

ໃນການພົບປະຄັ້ງນີ້, ສະຫາຍ ປອ. ສຸວັນນີ ໄຊຊະນະ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຕີລາຄາສູງຕໍ່ ຄະນະຜູ້ແທນ ສພຂ ຮ່າຕິ້ງ ທີ່ໄດ້ເດີນທາງມາຢ້ຽມຢາມ ສພຂ ບໍລິຄໍາໄຊ ໃນຄັ້ງນີ້ ເຊິ່ງໄດ້ສະແດງໃຫ້ເຫັນເຖິງຄວາມໝາຍສໍາຄັນຂອງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງພັກ ສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ ອ້າຍນ້ອງ, ພິເສດ ການມາຢ້ຽມຢາມຄັ້ງນີ້ ເປັນການນໍາເອົາໄມຕີຈິດມິດຕະພາບ, ຄວາມສາມັກຄີຮັກແພງອັນສະໜິດສະໜົມຂອງພັກ, ລັດ, ສພຂ ຮ່າຕິ້ງ ມາຍັງພັກ-ລັດ, ສພຂ ບໍລິຄໍາໄຊ. ໃນໂອກາດນີ້, ປະທານ ສພຂ ບໍລິຄໍາໄຊ ກໍໄດ້ສະແດງຄວາມຊົມເຊີຍຕໍ່ຜົນສໍາເລັດອັນໃຫຍ່ຫລວງ ແລະ ຮອບດ້ານທີ່ປະຊາຊົນຫວຽດນາມ ອ້າຍນ້ອງ ຍາດມາໄດ້ ພາຍໃຕ້ການນໍາພາອັນປີຊາສາມາດ, ສະຫລາດສ່ອງໃສຂອງພັກກອມມູນິດຫວຽດນາມ ໃນພາລະກິດປົດປ່ອຍຊາດ ໃນເມື່ອກ່ອນ ກໍຄືພາລະກິດປ່ຽນແປງໃໝ່ແຫ່ງການສ້າງສາພັດທະນາ ແລະ ປົກປັກຮັກສາປະເທດຊາດ ໃນປັດຈຸບັນ. ພ້ອມນີ້, ສອງຝ່າຍ ກໍໄດ້ຕີລາຄາສູງ ແລະ ສະແດງຄວາມພາກພູມໃຈເປັນຢ່າງຍິ່ງທີ່ເຫັນວ່າ ບໍ່ວ່າຍຸກສະໄໝໃດ ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງລາວ ແລະ ຫວຽດນາມ ກໍນັບມື້ນັບໄດ້ຮັບການເສີມຂະຫຍາຍໃຫ້ແຕກດອກອອກຜົນ ແລະ ເຂົ້າສູ່ລວງເລິກ ເຊິ່ງໄດ້ສະແດງອອກໃຫ້ເຫັນໃນການໄປມາຫາສູ່ກັນ ບໍ່ວ່າຈະເປັນການນໍາຂັ້ນສູງ, ຈົນຮອດບັນດາຂະແໜງການສູນກາງ ແລະ ທ້ອງຖິ່ນຂອງສອງປະເທດ ໄດ້ແລກປ່ຽນພົບປະການຢ້ຽມຢາມເຊິ່ງກັນແລະກັນ ຢ່າງເປັນປົກກະຕິ ເພື່ອສືບຕໍ່ຮັດແໜ້ນສາຍພົວພັນພິເສດ ເຮັດໃຫ້ການພົວພັນຮ່ວມມືໄດ້ຮັບການເສີມຂະຫຍາຍ ແລະແຕກດອກອອກຜົນຍິ່ງຂຶ້ນ.

(ນັກຂ່າວ ສພຂ ບໍລິຄໍາໄຊ)

# ສສຊ ແລະ ສສຂ ເຜີຍແຜ່ຜົນສໍາເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ແລະ ສພຂ ສະຫວັນນະເຂດ



(ສພຊ) ໃນລະຫວ່າງວັນທີ 1-2 ສິງຫາ 2022 ທ່ານ ພອນສານ ວິໄລເມັ້ງ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈໍາເຂດເລືອກຕັ້ງທີ 13, ຮອງປະທານຄະນະບໍລິຫານງານສູນກາງສະຫະພັນກໍາມະບານລາວ, ທ່ານນາງ ຈັນສະໝອນ ອິນທິລາດ ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈໍາເຂດເລືອກຕັ້ງເມືອງໄຊບູລີ, ປະທານກວດກາພັກ-ລັດເມືອງ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສໍາເລັດກອງປະຊຸມສະໄໝເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງ (ສພຂ) ຊຸດທີ II ຢູ່ເມືອງໄຊບູລີ ໂດຍການ ຕ້ອນຮັບຂອງທ່ານ ສີວິໄລ ອິນທະລີໄຊ ຮອງເຈົ້າເມືອງເມືອງໄຊບູລີ ພ້ອມດ້ວຍຄະນະນໍາຂັ້ນເມືອງ, ພະນັກງານ, ທະຫານ, ຕໍາຫລວດ ອໍານາດການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນເຂົ້າຮ່ວມຮັບຟັງ ເຊິ່ງໄດ້ມີການເຄື່ອນຢູ່ 4 ຈຸດຄື: ຈຸດກຸ່ມບ້ານນາວເໜືອ, ຈຸດຫ້ອງວ່າການປົກຄອງເມືອງ, ຈຸດກຸ່ມບ້ານ ປາກເຊບັ້ງໄຟ ແລະ ຈຸດກຸ່ມບ້ານແກ້ງກະເບົາ.

ໃນການເຄື່ອນໄຫວ, ໄດ້ຮັບຟັງການລາຍງານໂດຍຫຍໍ້ກ່ຽວກັບສະພາບການພັດທະນາເສດຖະກິດ-ສັງຄົມ ໂດຍຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດຢູ່ເມືອງໄຊບູລີ ຈາກທ່ານ ສີວິໄລ ອິນທະລີໄຊ ແລະ ຮັບຟັງການລາຍງານສະພາບການພັດທະນາເສດຖະກິດ-ສັງຄົມ ຂອງແຕ່ລະກຸ່ມບ້ານ ໂດຍຫຍໍ້ຈາກບັນດາທ່ານ ກໍາມະການພັກເມືອງຜູ້ຊີ້ນໍາກຸ່ມບ້ານ. ຈາກນັ້ນ, ສສຊ, ສສຂ ກໍໄດ້ຜັດປ່ຽນກັນໂອ້ລົມຕໍ່ຜູ້ມີສິດເລືອກຕັ້ງ ພ້ອມທັງເຜີຍແຜ່ເນື້ອໃນຕົ້ນຕໍ ທີ່ສໍາຄັນຂອງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX ໃນກອງປະຊຸມດັ່ງກ່າວ ໄດ້ຮອງຮັບຮອງເອົາບັນຫາຕ່າງໆ ເຊັ່ນ ມະຕິວ່າດ້ວຍການຍົກຍ້າຍ ແລະ ແຕ່ງຕັ້ງສະມາຊິກລັດຖະບານ; ການປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ; ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 6 ເດືອນຕົ້ນປີ ແລະ ທິດທາງ 6 ເດືອນທ້າຍປີ 2022; ຄວາມຄືບໜ້າການຈັດຕັ້ງປະຕິບັດແຜນການປະຕິຮູບລັດວິສາຫະກິດ ໄລຍະຜ່ານມາ ແລະ ທິດທາງແຜນການຮອດທ້າຍປີ 2022; ຜົນການຕິດຕາມກວດກາຄວາມຄືບໜ້າການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດໃນໄລຍະຜ່ານມາ ແລະ ທິດທາງແຜນການຕິດຕາມກວດກາໃນ 6 ເດືອນທ້າຍປີ 2022 ແລະ ປະຈໍາປີ 2023 ຂອງ ສພຊ. ພ້ອມນີ້, ກອງປະຊຸມ ສພຂ ໄດ້ມີການພິຈາລະນາຮັບຮອງເອົາ 3 ບົດລາຍງານຄື: ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ງົບປະມານແຫ່ງລັດຂອງແຂວງ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022, ພິຈາລະນາຮັບຮອງເອົາການປະເມີນເຂດຫ່າງໄກສອກຫລີກ ແລະ ທຸລະກັນດານຂອງອົງການປົກຄອງແຂວງ; ຮັບຮອງເອົາວຽກອື່ນໆທີ່ສໍາຄັນຂອງແຂວງສະຫວັນນະເຂດ.

ຄະນະ ສສຊ ແລະ ສສຂ ຍັງໄດ້ມີການອະທິບາຍເຖິງສາເຫດທີ່ພາໃຫ້ເກີດອັດຕາເງິນເຟີ້ທີ່ສູງຂຶ້ນ, ຄ່າຄອງຊີບແພງ, ບັນຫານໍ້າມັນແພງ, ການເຄື່ອນຍ້າຍແຮງງານ ແລະ ເຫດການທີ່ສໍາຄັນອີກອື່ນໆຈໍານວນໜຶ່ງ ເພື່ອໃຫ້ການຈັດຕັ້ງທຸກພາກສ່ວນ ແລະ ປະຊາຊົນມີຄວາມເຂົ້າໃຈຢ່າງຖືກຕ້ອງຕໍ່ແນວທາງນະໂຍບາຍຂອງພັກລະບຽບກົດໝາຍຂອງລັດ ພ້ອມທັງຮຽກຮ້ອງມາຍັງທຸກພາກສ່ວນຈົ່ງເປັນເຈົ້າການໃນການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ແລະ ແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນໃນສັງຄົມ ເພື່ອເຮັດໃຫ້ປະເທດຊາດບ້ານເມືອງມີຄວາມສະຫງົບປອດໄພມີການພັດທະນາຢ່າງຕໍ່ເນື່ອງ.

ໂອກາດດັ່ງກ່າວ, ການຈັດຕັ້ງບ້ານ ແລະ ປະຊາຊົນ ກໍໄດ້ມີການສະເໜີໃຫ້ພິຈາລະນາແກ້ໄຂບັນຫາຂໍ້ຂັດແຍ້ງກ່ຽວກັບທີ່ດິນ, ຂໍທຶນໃນການສ້ອມແປງເສັ້ນທາງລະຫວ່າງບ້ານຕໍ່ບ້ານ, ຂໍທຶນກໍ່ສ້າງ ແລະ ສ້ອມແປງອາຄານຮຽນ, ກໍານົດເຂດແດນປ່າສະຫງວນຂອງບ້ານ, ສະເໜີແກ້ໄຂຕົວເລກຄູອາສາ, ເພື່ອໃຫ້ຜູ້ແທນຮັບຮູ້ ແລະ ສະເໜີຕໍ່ຂັ້ນເທິງພິຈາລະນາແກ້ໄຂຕາມຄວາມເໝາະສົມ.

ນອກຈາກນີ້, ຄະນະ ສສຊ, ສສຂ ຍັງໄດ້ມອບລະບົບໂທລະໂຄ່ງໃຫ້ເມືອງຈໍານວນ 1 ຊຸດ ໃນມູນຄ່າ 5,6 ລ້ານກວ່າກີບ, ເສື້ອຍືດ 80 ໂຕ, ເຈວລ້າງມື 1 ແກັດ ແລະ ຜ້າອັດປາກ-ດັງ 7 ຊີບ ມູນຄ່າ 3,5 ລ້ານກີບ.

# ຍົກສູງຄຸນນະພາບທາງດ້ານເນື້ອໃນໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ໄຊສົມບູນ

(ສພຊ) ໃນລະຫວ່າງວັນທີ 1-2 ສິງຫາ 2022 ກ່ອນທີ່ຈະດໍາເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງ (ສພຂ) ໄຊສົມບູນ ຊຸດທີ II, ສພຂ ໄຊສົມບູນ ໄດ້ເປີດກອງປະຊຸມຍົກສູງຄຸນນະພາບທາງດ້ານເນື້ອໃນດໍາເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ໄຊສົມບູນ ຊຸດທີ II ທີ່ສະໂມສອນໃຫຍ່ເມືອງອະນຸວົງ ພາຍໃຕ້ການເປັນປະທານຂອງທ່ານ ແດງ ປະທຸມທອງ ປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈໍາເຂດເລືອກຕັ້ງທີ 18, ປະທານ ສພຂ ໄຊສົມບູນ ຊຸດທີ II, ມີທ່ານ ຄໍາພູທອນ ວົງພະຈັນ ຮອງປະທານ ສພຂ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈໍາເຂດເລືອກຕັ້ງເມືອງອະນຸວົງ ພ້ອມດ້ວຍ ສສຊ ປະຈໍາເຂດເລືອກຕັ້ງ ແລະ ສສຂ ປະຈໍາເຂດເລືອກຕັ້ງບັນດາເມືອງ ຕະຫລອດຮອດບັນດາຫົວໜ້າ-ຮອງຫົວໜ້າພະແນກ, ອົງການ, ກົມກອງ, ລັດວິສາຫະກິດອ້ອມຂ້າງແຂວງໄຊສົມບູນ ເຂົ້າຮ່ວມຢ່າງພ້ອມພຽງ.

ທັງນີ້, ກໍເພື່ອເປັນການສ້າງເງື່ອນໄຂໃຫ້ ສສຊ ແລະ ສສຂ ໄຊສົມບູນ ໄດ້ຮັບຟັງການລາຍງານ, ການຊີ້ແຈງອະທິບາຍຂອງບັນດາຫົວໜ້າ-ຮອງຫົວໜ້າພະແນກ, ອົງການ, ກົມກອງທີ່ກ່ຽວຂ້ອງກັບເນື້ອໃນຕ່າງໆ ພ້ອມທັງປຶກສາຫາລືແລກປ່ຽນຂໍ້ມູນເຊິ່ງກັນແລະກັນລະຫວ່າງ ສສຂ ໄຊສົມບູນ ແລະ ຄະນະນໍາພະແນກການທີ່ກ່ຽວຂ້ອງ ແນໃສ່ໃຫ້ມີຄວາມເຂົ້າໃຈຢ່າງເລິກເຊິ່ງ, ເປັນເອກະພາບ ເຊິ່ງຈະເປັນຂໍ້ສະດວກ ໃຫ້ແກ່ການພິຈາລະນາຮັບຮອງເອກະສານຕ່າງໆ ຢູ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ໄຊສົມບູນ ຊຸດທີ II ໃຫ້ມີປະສິດທິຜົນ ບັນລຸຕາມເປົ້າໝາຍທີ່ກໍານົດໄວ້.



ກອງປະຊຸມຄັ້ງນີ້, ໄດ້ສຸມໃສ່ພິຈາລະນາ ແລະ ສ້າງຄວາມເຂົ້າໃຈ ຕໍ່ບັນດາເນື້ອໃນຕ່າງໆ ທີ່ມີຄວາມໝາຍອັນສໍາຄັນຂອງແຂວງໄຊສົມບູນຄື: ຮັບຟັງບົດລາຍງານຫຍໍ້ຂອງເຈົ້າແຂວງໆໄຊສົມບູນ ກ່ຽວກັບສະພາບການພັດທະນາໂດຍລວມຢູ່ແຂວງ ສະເໜີໂດຍທ່ານ ສົມບູນ ສອນລິດທິເດດ ຫົວໜ້າຫ້ອງວ່າການແຂວງ; ຮັບຟັງບົດລາຍງານ ກ່ຽວກັບບົດລາຍງານແຜນພັດທະນເສດຖະກິດ-ສັງຄົມຂອງແຂວງ ປະຈໍາ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2022 ນໍາສະເໜີໂດຍທ່ານ ພູພັດ ສິງຫາວົງໄຊ ຮອງຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງ; ຮັບຟັງບົດລາຍງານກ່ຽວກັບແຜນງົບປະມານ ປະຈໍາ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2022 ນໍາສະເໜີໂດຍທ່ານ ມີໄຊ ຂຸນພົນ ຮອງຫົວໜ້າພະແນກການເງິນແຂວງ; ຮັບຟັງບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດ ດໍາລັດ 414/ລບ, ປະຈໍາ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2022 ໂດຍຫົວໜ້າກອງເລຂາ 414; ຮັບຟັງການລາຍງານການຈັດຕັ້ງປະຕິບັດວຽກງານແກ້ໄຂຄວາມທຸກຍາກຂອງແຂວງໄຊສົມບູນ ຕາມມະຕິຂອງ ສພຂ ໄຊສົມບູນ ສະບັບເລກທີ 21/ສພຂ-ຊບ, ລົງວັນທີ 18 ກຸມພາ 2022 ໂດຍຫົວໜ້າກອງເລຂາຄະນະສະເພາະກິດແກ້ໄຂຄວາມທຸກຍາກ; ຮັບຟັງແຜນການເຄື່ອນໄຫວ ແລະ ແຜນງົບປະມານການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໂດຍຫົວໜ້າກອງເລຂາ; ຮັບຟັງແຜນການເຄື່ອນໄຫວ ແລະ ແຜນງົບປະມານ ການແກ້ໄຂບັນຫາຢາເສບຕິດ ໂດຍຫົວໜ້າກອງເລຂາ.

ໂອກາດດັ່ງກ່າວ, ສສຊ ແລະ ສສຂ ໄດ້ສຸມສະຕິປັນຍາຄວາມຮູ້, ຄວາມສາມາດຂອງຕົນ ປະກອບຄໍາເຫັນແລກປ່ຽນບົດຮຽນ ພ້ອມທັງມີຄໍາສະເໜີໃນຫລາຍໆບັນຫາທີ່ບໍ່ທັນເຂົ້າໃຈ ຕໍ່ການປະຕິບັດຈັດຕັ້ງວຽກງານຂອງພະແນກການທີ່ກ່ຽວຂ້ອງ ເພື່ອໃຫ້ໄດ້ເນື້ອໃນທີ່ແທດເໝາະກັບສະພາບຄວາມເປັນຈິງ. ພ້ອມດຽວກັນນີ້, ບັນດາທ່ານຫົວໜ້າ-ຮອງຫົວໜ້າພະແນກ, ອົງການ, ກົມກອງທີ່ກ່ຽວຂ້ອງ ໄດ້ຜັດປ່ຽນກັນຂຶ້ນລາຍງານ, ຊີ້ແຈງ, ອະທິບາຍ ຕໍ່ຄໍາຊັກຖາມຂອງບັນດາທ່ານ ຜູ້ແທນໃຫ້ຈະແຈ້ງ. ທັງນີ້, ກໍເພື່ອເຮັດໃຫ້ຜູ້ແທນປະຊາຊົນສາມາດນໍາເອົາຄໍາຕອບທີ່ສໍາຄັນດັ່ງກ່າວ ເປັນຂໍ້ມູນທາງດ້ານເນື້ອໃນທີ່ມີຄຸນນະພາບໜັກແໜ້ນ ເຊື່ອຖືໄດ້ໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ໄຊສົມບູນ ຊຸດທີ II ແລະ ເປັນຂໍ້ມູນທີ່ຈະນໍາໄປແຈ້ງຂ່າວ, ໂຄສະນາເຜີຍແຜ່ໃຫ້ແກ່ພໍ່ແມ່ປະຊາຊົນບັນດາເຜົ່າຜູ້ມີສິດເລືອກຕັ້ງທົ່ວແຂວງໄຊສົມບູນ ຮັບຮູ້ຢ່າງທົ່ວເຖິງກັນ.

(ນາງ ອໍາໄພພອນ ແກ້ວວິໄລ)



## ສຸກສະບາຍຫາຍໂຣຄາ

# ດື່ມກາເຟຫລາຍ ລະວັງພະຍາດຮ້າຍຈະມາຢາວມແບບຮູ້ບໍ່ໂຕ

ແປ ແລະ ຮຽບຮຽງໂດຍ: ສາວແວ່ນ



ຫລາຍທ່ານ ເລືອກດື່ມກາເຟຕອນເຊົ້າ ແລະ ຕອນບ່າຍ ເພື່ອໃຫ້ຮູ້ສຶກມີພະລັງ ທັງເປັນການກະຕຸ້ນສະໝອງ ເພື່ອຊ່ວຍໃນການເຮັດວຽກຂອງແຕ່ລະມື້ ເຊິ່ງອາດຈະກາຍເປັນກິດຈະວັດປະຈຳວັນຂອງບາງທ່ານ ແຕ່ທ່ານຮູ້ບໍວ່າ ການດື່ມກາເຟຫລາຍເກີນໄປ ກໍອາດຈະເປັນອັນຕະລາຍຕໍ່ສຸຂະພາບ; ໃນຄໍລຳສຸກສະບາຍຫາຍໂລຄາສະບັບນີ້, ເຮົາມາເບິ່ງນຳກັນວ່າ ອັນຕະລາຍຈາກການດື່ມກາເຟຫລາຍເກີນໄປ ຈະມີຄວາມສ່ຽງເຮັດໃຫ້ເກີດພະຍາດຫຍັງແດ່.

**1. ພະຍາດຫົວໃຈ**

ການດື່ມກາເຟຫລາຍເກີນໄປ ຈະເຮັດໃຫ້ມີຄວາມສ່ຽງເປັນພະຍາດຫົວໃຈ ບໍ່ວ່າຈະເປັນພະຍາດຫົວໃຈເຕັ້ນໄວຜິດປົກກະຕິ ແລະ ເຕັ້ນຜິດຈັງຫວະ ລວມທັງພະຍາດທີ່ກ່ຽວຂ້ອງກັບກ້າມຊີ້ນຫົວໃຈ ເພາະຄາເຟອີນໃນກາເຟໄປກະຕຸ້ນຫົວໃຈ ເຮັດໃຫ້ເຕັ້ນຜິດປົກກະຕິ ເຊິ່ງບາງຄັ້ງອາດເຮັດໃຫ້ຫົວໃຈສັ່ນໃນເວລາດຽວກັນ ແລະ ຖ້າເປັນຄົນເຈັບທີ່ເປັນພະຍາດຫົວໃຈແລ້ວ ຍິ່ງຈະເຮັດໃຫ້ອາການຮ້າຍແຮງຂຶ້ນຕື່ມ.

**2. ອາການມຶນຊາ**

ເມື່ອຮ່າງກາຍຂາດວິຕາມິນບີ 1 ຈະເຮັດໃຫ້ເກີດອາການມຶນຊາ, ກ້າມເນື້ອອ່ອນເພຍ, ໃຄ່ບວມ, ບາງຄັ້ງເຮັດໃຫ້ຫົວໃຈວາຍ ແລະ ເສຍຊີວິດໄດ້; ສາເຫດໜຶ່ງທີ່ເຮັດໃຫ້ຮ່າງກາຍຂາດວິຕາມິນບີ 1 ແມ່ນຍ້ອນການດື່ມກາເຟຫລາຍເກີນໄປ ເພາະຄາເຟອີນຈະລົບກວນການດູດຊຶມວິຕາມິນນີ້ບີ 1 ເຖິງຈະກິນອາຫານທີ່ອຸດົມໄປດ້ວຍວິຕາມິນບີ 1 ຫລາຍປານໃດກໍຕາມ ຖ້າມີນິໄສການດື່ມກາເຟຫລາຍກໍຈະບໍ່ຊ່ວຍຫຍັງ.

**3. ໂລກກະດູກຜ່ອຍ**

ການດື່ມກາເຟຫລາຍເກີນໄປ ເປັນສາເຫດໜຶ່ງຂອງພະຍາດກະດູກຜ່ອຍ ເນື່ອງຈາກກາເຟຂັດຂວາງການດູດຊຶມທາດແຄວຊຽມ ທັງຂັດຂວາງການນຳເອົາທາດແຄວຊຽມໄປໃຊ້ ຈຶ່ງເຮັດໃຫ້ກະດູກບໍ່ໄດ້ຮັບການບຳລຸງຮັກສາ ຈົນພາໃຫ້ເກີດມີອາການຂາດທາດແຄວຊຽວ ເຮັດໃຫ້ກະດູກຜ່ອຍ ແລະ ບາງ.

**4. ຄວາມດັນເລືອດສູງ**

ສຳລັບຜູ້ທີ່ເປັນຄວາມດັນເລືອດສູງຢູ່ແລ້ວ ຈຳເປັນທີ່ຈະຕ້ອງໄດ້ລະມັດລະວັງໃນການດື່ມກາເຟ ເພາະຖ້າດື່ມຫລາຍເກີນໄປ ຈະເຮັດໃຫ້ກະຕຸ້ນການປ່ອຍສານອະດີນໍລີນ (adrenaline) ເຊິ່ງຈະເຮັດໃຫ້ການເຮັດວຽກຂອງຫົວໃຈເພີ່ມຂຶ້ນ ແລະ ເຮັດໃຫ້ຫົວໃຈຂອງເຕັ້ນແຮງ ແລະ ໄວຂຶ້ນ, ຄວາມດັນເລືອດກໍຈະເພີ່ມຂຶ້ນ ອັນເປັນສາເຫດທີ່ພາເຮັດໃຫ້ເກີດພະຍາດອື່ນໆຕື່ມອີກ.

**5. ພະຍາດກະເພາະອາຫານ**

ການດື່ມກາເຟຫລາຍເກີນໄປ ຈະໄປກະຕຸ້ນການການປ່ອຍອາຊິດອອກມາ ເຊິ່ງອາຊິດທີ່ປ່ອຍອອກມາຫລາຍກວ່າປົກກະຕິ ຈະເພີ່ມໂອກາດໃຫ້ກະເພາະຖືກທຳລາຍຫລາຍຂຶ້ນ ສຳລັບທ່ານໃດທີ່ເປັນໂລກກະເພາະຢູ່ແລ້ວ ການດື່ມກາເຟຫລາຍເກີນໄປ ຈະກະຕຸ້ນໃຫ້ມີບາດແຜໃນກະເພາະຫລາຍຂຶ້ນ ພາໃຫ້ເກີດອາການເຈັບທ້ອງຢ່າງຮຸນແຮງ.

ແນ່ນອນວ່າ, ການດື່ມກາເຟມີຜົນປະໂຫຍດຫລາຍຕໍ່ຮ່າງກາຍ ແຕ່ຖ້າດື່ມຫລາຍເກີນໄປ ຈະສົ່ງຜົນບໍ່ດີຕໍ່ຮ່າງກາຍໄດ້ເຊັ່ນດຽວກັນ; ດັ່ງນັ້ນ, ຄວນພະຍາຍາມຄວບຄຸມການກິນກາເຟໃນປະລິມານທີ່ເໝາະສົມ ແຕ່ກໍຕ້ອງເອົາໃຈໃສ່ໃນການກິນອາຫານໃຫ້ຄົບ 5 ໝູ່ ເພື່ອໃຫ້ຮ່າງກາຍໄດ້ຮັບສານອາຫານທີ່ສົມບູນ ແລະ ຫລຸດຜ່ອນຄວາມສ່ຽງຕໍ່ພະຍາດຕ່າງໆ.

**www.sanook.com**

## ສາລາກະວີ

# ກົດໝາຍ

**# ໂດຍ: ສົມສຸກ ສຸກສະຫວັນ**

◆ ອັນວ່າ ກົກແກ່ນເຫງົ້າ
ກົດໝາຍຄືໂຄງບົນ
ໂຄງລ່າງເສດຖະກິດຄ້ຳ
ບົນແລະລ່າງສານສອດກ້ຽວ
ຄຸມຄອບສັງຄົມ
ເພື່ອຄົນຮຽນຮູ້
ເໝືອນໂລຫິດໄຫລຕະຫລອດ
ເພື່ອຄວາມເຂັ້ມລັດດຽວ

◆ ລັດຖະທຳມະນູນເປັນແມ່ເບົ້າ
ລັດປະຊາທິປະໄຕປະຊາຊົນ
ສິດພົນທະພົນລະເມືອງວາງໄວ້
ລະບອບໃໝ່ໃສສ່ອງແຈ້ງ
ມີກົດໝາຍອອກໃຊ້
ກົດໝາຍລູກຫລອມມາ
ສ້າງເຄື່ອງມືນຳໃຊ້
ຢ່າທຳເກີນກາຍຂອບ
ທຸກຄົນໄດ້ນັບຖື

◆ ໝາຍວ່າລັດສ້າງໃຫ້
ດັດສົມໂດຍກົດໝາຍ
ໂດຍແມ່ນມວນປະຊາເຊື້ອ
ເລືອກຜູ້ແທນເກັ່ງກ້າ
ນິຕິລັດສັງຄົມລາວ
ດັ່ງດຽວດາຖ້ວນ
ວົງສາຄະນາຍາດ
ຕາງໜ້າຢູ່ສະພາ

◆ ທຳມະນູນຍັງວ່າໄວ້
ປະຊາມີສິດສຽງ
ຄວາມຜິດກໍລະບຸໃຫ້
ປົກປ້ອງຜູ້ບໍ່ຜິດພາດພັ້ງ
ໄຂປ່ອງແປງທາງ
ເພື່ອປະຊາເປັນເຈົ້າ
ຫລາຍມາດຕາວາງອອກ
ໃຫ້ຫລຸດພົ້ນຈາກຈ່ອງຈຳ

◆ ເນື່ອງຈາກຖືກສ້າງຕັ້ງ
ຂອງປະຊາຊົນລາວ
ເປັນເຄື່ອງມືປົກປ້ອງ
ຈາກປະຊາໂດຍປະຊາ
ເພື່ອປະຊາໂດຍທ່ຽງແທ້
ຕາມເຈດຕະນາລົມ
ທົ່ວແດນດິນດ້າວ
ດູແລຜົນປະໂຫຍດ
ເຈົ້າຂອງເຫງົ້າລັດລາວ

◆ ດັ່ງນັ້ນ ຈຶ່ງຮຽກຮ້ອງ
ຊົມໃຊ້ສິດເສລີ
ພໍວ່າສິດຫລາຍແລ້ວ
ຜູ້ອື່ນສິດເຂົາມີພຽບພ້ອມ
ຄຳພິພາກສາ ຫາກຍັງຄືຜ່ານພົ້ນ
ຄວນເຄົາລົບກົດໝາຍ ຈິງຈັງເນີ!
ທີ່ມີລະບຸໄວ້
ທຳຕາມໃຈກາຍເຂດ
ເພື່ອປົກປ້ອງຖ້າລ່ວງເກີນ
ຄວນສຸດສ້ຽງເລື່ອງອຸທອນ ລະເດີ!



## ທັກທາຍ ລະບາຍ

**# ສາວຈົ້ມ**

*(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເລັ່ງພິທີການ)*

*☙ **ກິດ**ຈະກຳສະເຫລີມສະຫລອງ ປີສາມັກຄີມິດຕະພາບ **ລາວ-ຫວຽດນາມ** ຄຶກຄື້ນມາໂດຍຕະຫລອດ ພິເສດແມ່ນການແຂ່ງຂັນກອດສອບ **ບົດປະພັນອັນປະຄະດີທົ່ວປະເທດ** ເຊິ່ງກຳນົດປິດຮັບບົດໃນວັນທີ **16 ສິງຫາ** ຜ່ານມາ ແລະ ກຽມ**ປະກາດຜົນໃນວັນທີ 1 ກັນຍາ** 2022 ໃນນັ້ນ, ເຫັນວ່າມີຫລາຍລາງວັນເພີ່ນກະກຽມເພື່ອໄວ້ ມອບໃຫ້ເພື່ອນຮ່ວມອຸດົມການ ຊາວນັກຂຽນທັງຫລາຍ ຜູ້ມັກໃນການຂຽນເລື້ອງ **ບົດກະວີປະພັນພ້ອມ** ລີລາເດັດເລື່ອງຂຽນເດັ່ນ ຊິເຫັນຜົນໃນບໍ່ຊ້າ ລາງວັນມາບໍ່ໄກ້ ລໍ່ລຸ້ນພ້ອມພໍ່ກັບ **ພີ່ນ້ອງເອີຍ!***

*☙ **ຂໍເປັນ**ກຳລັງໃຈໃຫ້**ພໍ່ແມ່ປະຊາຊົນລາວບັນດາເຜົ່າ**ໃນຂອບເຂດທົ່ວປະເທດ ທີ່ໄດ້ຮັບຜົນກະທົບຈາກເຫດການ**ນ້ຳຖ້ວມ**ຢູ່ຫລາຍພື້ນທີ່ ພາໃຫ້ເກີດມີຄວາມເສຍຫາຍຫລາຍສົມຄວນ ຈຶ່ງຂໍຂຽນຊາວຊໍ້ ຄວາມສົ່ງມາຫາ **ພໍ່ແມ່ປວງປະຊາ** ທົ່ວຫາບີແຄວ້ນ ຂໍຈົ່ງອົດທົນສູ້ ກັບອຸປະສັກຍິ່ງໃຫຍ່ ຂໍໃຫ້ໄພຜ່ານພົ້ນ ລາວທຸກຄົນຊວ່າຍຊວ້ານ ໃຫ້ລາວພົ້ນຜ່ານໄພ **ທ່ານເອີຍ!***

*☙ **ສາວຈົ້ມ** ມີໂອກາດໄດ້ເຂົ້າຮ່ວມກອງປະຊຸມຝຶກອົບຮົມວຽກງານໂຄສະນາເຜີຍແຜ່ລັດຖະທຳມະນູນ, ກົດໝາຍ ແລະນິຕິກຳໃຕ້ກົດໝາຍ ໃຫ້ລັດຖະກອນ ຂອງກຳມາທິການກົດໝາຍ ແລະສະພາປະຊາຊົນແຂວງ **ຄັ້ງວັນທີ 15-17 ສິງຫາ** ທີ່ຫລວງພະບາງ ເລີຍໄດ້ພົບເພື່ອນຮ່ວມງານ **ສາຍສີ-ມີສີນ** ທີ່ມາຈາກຫລາຍທ້ອງຖິ່ນກໍຄືເຂດເລືອກຕັ້ງຕ່າງໆໃນທົ່ວປະເທດ ຄາວນີ້ພານພົບພໍ້ ປະຈົບຈອບງານກົດໝາຍ ລ່າຍເຖິງນິຕິກຳ ເລື່ອງໂຄສະນາໃຫ້ ປວງຊົນລາວເຮົາໄດ້ ກຳກົດໝາຍແໜ້ນແກ່ນ ເພາະທຸກກິດຈະກຳລ້ວນຕັ້ງແຕ່ຮັດແໜ້ນ ພໍພັນກ້ຽວກ່ຽວກົດໝາຍ **ນັ້ນແລ້ວ!***

## ຊວນຍິ້ມ

**# ແອບຕຸ້ງ**

**ເລື່ອງ: ຢ່າມາຕົວະ**

ເດັກນ້ອຍສອງຄົນກຳລັງຍ່າງຢູ່ແຄມທາງ ທັນໃດເຮືອບິນກໍພາກັນ ແຫງນໜ້າຂຶ້ນຟ້າ, ຄົນໜຶ່ງເວົ້າຂຶ້ນວ່າ:

- ກູຄື່ແລ້ວລະ ນັ້ນແມ່ນຍົນປະທານປະເທດ

- ມຶງເປັນບ້າຕີ! ຄັນແມ່ນຍົນປະທານປະເທດ ຄືບໍ່ມີຂະບວນ ລົດນຳທາງຂຶ້ນບະ, ມຶງຢ່າມາຕົວະກູ



**ຄະຕິເຕືອນໃຈ**

**# ດອກຂະຍອມ**

ບ້າຊຸບໄວ້ໃນ ບ້າໃສໄວ້ນອກ

# ກົດໝາຍວ່າດ້ວຍລັດຖະບານ (ສະບັບປັບປຸງ)

ຕໍ່ຈາກສະບັບກ່ອນ...

**ໝວດທີ 6**

**ກອງປະຊຸມລັດຖະບານ**

**ມາດຕາ 23 (ປັບປຸງ) ກອງປະຊຸມລັດຖະບານ**

- ກອງປະຊຸມລັດຖະບານ ເປີດຂຶ້ນເດືອນລະເທື່ອ ໂດຍແມ່ນນາຍົກລັດຖະມົນຕີເປັນຜູ້ຮຽກໂຮມແລະເປັນປະທານ, ຍົກເວັ້ນກໍລະນີປະທານປະເທດເຂົ້າຮ່ວມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ຂອງກົດໝາຍສະບັບນີ້.

- ກອງປະຊຸມລັດຖະບານ ເປີດຂຶ້ນໄດ້ກໍຕໍ່ເມື່ອ ມີສະມາຊິກລັດຖະບານເຂົ້າຮ່ວມຢ່າງໜ້ອຍ ສອງສ່ວນສາມ ຂອງຈຳນວນສະມາຊິກລັດຖະບານ ທັງໝົດ.

- ສະມາຊິກລັດຖະບານ ມີໜ້າທີ່ເຂົ້າຮ່ວມກອງປະຊຸມລັດຖະບານທຸກຄັ້ງ. ນອກຈາກນັ້ນ, ອາດເຊີນຜູ້ຕາງໜ້າຈາກອົງການອື່ນ ທີ່ກ່ຽວຂ້ອງ ເຂົ້າຮ່ວມກອງປະຊຸມລັດຖະບານ ກໍໄດ້. ສຳລັບ ຜູ້ບໍ່ແມ່ນສະມາຊິກລັດຖະບານ ມີສິດປະກອບຄວາມເຫັນ ຕໍ່ກອງປະຊຸມ ແຕ່ບໍ່ມີສິດລົງຄະແນນສຽງ.

- ກອງປະຊຸມລັດຖະບານ ພິຈາລະນາ, ຕົກລົງບັນຫາ ຫຼື ລົງມະຕິ ໂດຍຖືເອົາສຽງສ່ວນຫຼາຍ. ຖ້າຫາກມີສຽງເທົ່າກັນ ໃຫ້ຖືເອົາສຽງຂອງປະທານກອງປະຊຸມ ເປັນອັນຕັດສິນ.

- ໃນກໍລະນີ ມີຄວາມຈຳເປັນ ແລະ ຮີບດ່ວນ ລັດຖະບານ ອາດເປີດກອງປະຊຸມວິສາມັນກໍໄດ້ ຕາມການຕົກລົງຂອງນາຍົກລັດຖະມົນຕີ ຫຼື ຕາມການສະເໜີຂອງສະມາຊິກລັດຖະບານຢ່າງໜ້ອຍໜຶ່ງສ່ວນສາມ ຂອງຈຳນວນສະມາຊິກລັດຖະບານທັງໝົດ ຫຼື ອາດເປີດກອງປະຊຸມ ນາຍົກ-ຮອງນາຍົກ ລັດຖະມົນຕີ ຮ່ວມກັບສະມາຊິກລັດຖະບານຈຳນວນໜຶ່ງທີ່ກ່ຽວຂ້ອງກໍໄດ້ ຕາມການຕົກລົງຂອງນາຍົກລັດຖະມົນຕີ.

- ລັດຖະບານ ຍັງຮຽກໂຮມ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເຂົ້າຮ່ວມປະຊຸມ ປີລະສອງເທື່ອ ເພື່ອຕິດຕາມ, ກວດກາ ແລະ ຊີ້ນຳ ການປະຕິບັດໜ້າທີ່ ຂອງອົງການປົກຄອງທ້ອງຖິ່ນ ຫຼື ອາດເຊີນ ຫົວໜ້າ ຫຼື ປະທານ ຂອງອົງການຈັດຕັ້ງ ພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ເຂົ້າຮ່ວມເພື່ອປະກອບຄຳເຫັນ.

**ມາດຕາ 24 ກອງປະຊຸມພິເສດ**

ກອງປະຊຸມພິເສດ ຂອງລັດຖະບານ ແມ່ນກອງປະຊຸມລັດຖະບານ ໂດຍການຮຽກໂຮມ ແລະ ເປັນປະທານ ຂອງປະທານປະເທດ ຊຶ່ງສາມາດເປີດຂຶ້ນໄດ້ທຸກເວລາ ຫຼື ເມື່ອປະເທດຊາດຕົກຢູ່ໃນສະພາວະວິກິດການຮ້າຍແຮງ ທາງດ້ານເສດຖະກິດ-ສັງຄົມ, ໄພທຳມະຊາດ ຫຼື ໃນສະພາວະສຸກເສີນ ທາງດ້ານການປ້ອງກັນຊາດ-ປ້ອງກັນຄວາມສະ ຫງົບ ແລະ ການຕ່າງປະເທດ.

**ມາດຕາ 25 (ປັບປຸງ) ເນື້ອໃນທີ່ນຳເຂົ້າກອງປະຊຸມ**

ເນື້ອໃນທີ່ນຳເຂົ້າ ພິຈາລະນາ ແລະ ຕົກລົງ ໃນກອງປະຊຸມລັດຖະບານ ມີ ດັ່ງນີ້:

1. ແຜນຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
2. ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາແຫ່ງຊາດ;
3. ຮ່າງກົດໝາຍ, ຮ່າງລັດຖະບັນຍັດ ແລະ ຮ່າງດຳລັດ;
4. ການ ສ້າງຕັ້ງ, ໂຮມ, ແຍກ, ຍຸບເລີກ ກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນ ຫຼວງ ແລະ ເຂດພິເສດ, ການກຳນົດເຂດແດນຂອງແຂວງ, ນະຄອນຫຼວງ ແລະ ເຂດພິເສດ ກ່ອນນຳສະເໜີສະພາແຫ່ງຊາດພິຈາລະນາຮັບຮອງ;
5. ການ ສ້າງຕັ້ງ, ໂຮມ, ແຍກ, ຍຸບເລີກ ບັນດາອົງການຈັດຕັ້ງ ທີ່ຂຶ້ນກັບລັດຖະບານໂດຍກົງ;
6. ການສ້າງຕັ້ງ, ໂຮມ, ແຍກ, ຍຸບເລີກ, ກຳນົດເຂດແດນຂອງ ເມືອງ, ເທດສະບານ, ນະຄອນ;
7. ການ ສ້າງຕັ້ງ ຫຼື ຍຸບເລີກ ເຂດເສດຖະກິດພິເສດ, ໂຄງການລົງທຶນຂະໜາດໃຫຍ່ ທີ່ກ່ຽວຂ້ອງ ກັບຫຼາຍພາກສ່ວນ;
8. ການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ;
9. ເນື້ອໃນ ການເຈລະຈາ, ສົນທິສັນຍາ ແລະ ສັນຍາ ທີ່ຈະເຊັນກັບຕ່າງປະເທດ;
10. ການພິຈາລະນາ ຕົກລົງ ກ່ຽວກັບ ການໃຫ້ສັນຊາດລາວ, ຖອນສັນຊາດລາວ, ປະສັນຊາດລາວ, ການໃຫ້ສັນຊາດລາວຄືນ ແລະ ການເອົາເດັກໄປເປັນລູກລ້ຽງ ຂອງພົນລະເມືອງຕ່າງປະເທດ;
11. ການພິຈາລະນາ ຕົກລົງ ໃຫ້ຄົນຕ່າງປະເທດ ເປັນພົນລະເມືອງກິດຕິມະສັກ;
12. ການພິຈາລະນາການໃຫ້ອະໄພຍະໂທດເພື່ອສະເໜີປະທານປະເທດ;
13. ບັນຫາ ທີ່ຈຳເປັນ ແລະ ຮີບດ່ວນ ຂອງຂະແໜງການ ຫຼື ທ້ອງຖິ່ນ ສະເໜີຕໍ່ນາຍົກລັດຖະມົນຕີ ທີ່ພົວພັນເຖິງຜົນປະໂຫຍດອັນໃຫຍ່ຫຼວງ ຂອງຊາດ ຫຼື ຂອງປະຊາຊົນ;
14. ການຕ່າງປະເທດ, ການພົວພັນ ແລະ ຮ່ວມມື, ການເຊື່ອມໂຍງກັບສາກົນ ແລະ ພາກພື້ນ ທີ່ເປັນບັນຫາໃໝ່ສຳຄັນ ຊຶ່ງຮຽກຮ້ອງໃຫ້ມີການຕົກລົງເປັນເອກະພາບ ດ້ານທັດສະນະ ຫຼື ການອອກສຽງຕ່າງໆ;

ອ່ານຕໍ່ສະບັບໜ້າ...




## ປົດເທີມແລ້ວເຮັດຫຍັງດີ?

**ໂດຍ: ດົ້ນກົບເມກ**

ໄລຍະເດືອນ 7-9 ເປັນໄລຍະທີ່ຫລາຍໂຮງຮຽນຂອງລັດປົດເທີມ-ປົດການຮຽນ ເຊິ່ງພາລະໜ້າທີ່ການອົບຮົມບົ່ມນິດໄສກໍຕົກມາໃສ່ພໍ່ແມ່ ຫລື ຜູ້ປົກຄອງຫລາຍທ່ານ ກໍເລືອກທາງອອກດ້ວຍການນຳເອົາລູກໄປຮຽນເພີ່ມໂຮງຮຽນເອກະຊົນ, ບາງຄົນຮຽນພາສາຕ່າງປະເທດ..., ບາງຄົນພໍ່ແມ່ກະເປົາໜັກແດ່ກໍສົ່ງລູກໄປຮຽນໄລຍະສັ້ນຢູ່ຕ່າງປະເທດ ພໍ່ແມ່ບາງຄົນກໍເປີດໂອກາດໃຫ້ລູກຊ່ວຍເຫລືອທຸລະກິດຄອບຄົວ.

ບົດບາດການສອນ-ການເຝິກອົບຮົມມາລະຍາດ-ສິນທຳນັ້ນ ຜູ້ຂຽນຄິດວ່າ ພໍ່ແມ່ຜູ້ປົກຄອງຍັງຕ້ອງເອົາໃຈໃສ່ເປັນພິເສດ ເພາະເດັກນ້ອຍມັກຈະເຊື່ອຟັງພໍ່ແມ່ຢູ່ໃນຄອບຄົວກ່ອນຄູຢູ່ໂຮງຮຽນເພາະພໍ່ແມ່ມີອິດທິພົນຕໍ່ພວກເຂົາເຈົ້າໂດຍກົງທັງການລ້ຽງດູ ແລະ ປະພຶດເປັນແບບຢ່າງ ຖ້າວ່າພໍ່ແມ່ ມີນິດໄສ ແລະ ພຶດຕິກຳເຫັນແກ່ໂຕ, ເຮັດອັນໃດກໍແຂ່ງຂັນໃຫ້ຕົນເອງໄດ້ກ່ອນໝູ່ສະເໝີ ຈຶ່ງຖືວ່າດີ ເຊິ່ງລວມເຖິງການຂັບຂີ່ລົດຕາມທ້ອງຖະໜົນ ແລະແຊງຕັດໜ້າຂໍແຕ່ໄດ້ໄປກ່ອນ.... ພຶດຕິກຳເຫັນແກ່ໂຕ ຫລືການເອົາປຽບຄົນອື່ນຕ່າງໆນັ້ນ ຈະສົ່ງຜົນກະທົບຕໍ່ຈິດໃຈຂອງລູກ ດັ່ງຄຳເວົ້າບູຮານສອນວ່າ: ເຊື້ອໝາກຕ້ອງບໍ່ຫ່ອນຫລົ່ນໄກກົກ ແນວພົມດົກບໍ່ຫ່ອນເປັນຫົວລ້ານ....,

ປົດພາກຮຽນນີ້ ຜູ້ຂຽນຄິດວ່າ ພໍ່ແມ່ຜູ້ປົກຄອງ ຄວນຈະໃຊ້ເວລາທົບທວນ ພິຈາລະນາວ່າ: ເຮົາຄວນປູກຝັງຄ່ານິຍົມລູກຫລານແບບໃດແດ່ເຊັ່ນ:

1. ສ້າງໂອກາດໃຫ້ໄດ້ຮຽນຮູ້ຮີດຄອງປະເພນີ.
2. ສ້າງໂອກາດໃຫ້ເວລາພວກເຂົາ ໄດ້ຮຽນຮູ້ຄຸນຄ່າທາງສິນທຳໂດຍສິ່ງເສີມບົດບາດຄູສອນ ຫລື ຜູ້ມີໜ້າທີ່ສອນໂດຍກົງ ຄວນທົບທວນບົດບາດວ່າ: ສັງຄົມຕ້ອງການຫຍັງ ແລະ ຊາວໜຸ່ມເຍົາວະຊົນຕ້ອງການຫຍັງ ໝາຍຄວາມວ່າ ເຮົາແກ້ບັນຫາປາກທ້ອງຍຸກເສດຖະກິດຝືດເຄືອງ ກໍຕ້ອງໄດ້ເອົາໃຈໃສ່ເຍົາວະຊົນໄປພ້ອມກັນ ຖ້າຄົນໃຫຍ່ຂຶ້ນມາເປັນພຽງມະນຸດເສດຖະກິດ ແຕ່ໄຮ້ຈິດວິນຍານທາງສິນລະທຳ-ຮີດຄອງປະເພນີ ກໍຈະຍິ່ງເຮັດໃຫ້ຄົນເຮົາ, ມີຈິດໃຈແຫ້ງແລ້ງ ຫລືບາງທີກໍມີທ່າອ່ຽງສູງເປັນສັງຄົມແລ້ງນ້ຳໃຈ!




**ກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ (ສະບັບປັບປຸງ)**

**ຄັດໂດຍ: ກົງທະນູຄຳ ພິພັດເສລີ**

17. ຫລັກຖານໜັກແໜ້ນ ໝາຍເຖິງ ຫລັກຖານຜູກມັດ, ຮັດກຸມ ທີ່ຢັ້ງຢືນວ່າ ມີການກະທຳຜິດ;

18. ຫລັກຖານຜູກມັດ ໝາຍເຖິງ ຫລັກຖານທີ່ຢັ້ງຢືນວ່າ ຜູ້ຖືຫາ ຫລື ຈຳເລີຍ ໄດ້ກະທຳຜິດ;

## ຄວາມໝາຍ...

ເຖິງວັນປະກາດໃຊ້ລັດຖະທຳມະນູນຂອງ ສປປລາວ ໄດ້ໝູນວຽນມາຄົບຮອບ 31 ປີພໍດີ ໃນວັນທີ 15 ສິງຫາ 2022. ລັດຖະທຳມະນູນສະບັບນີ້ແມ່ນລັດຖະທຳມະນູນ ຂອງລະບອບປະຊາທິປະໄຕ ປະຊາຊົນ ຢູ່ປະເທດເຮົາ, ໄດ້ຮັບຮູ້ຜົນງານຍິ່ງໃຫຍ່ ທີ່ປະຊາຊົນເຮົາຍາດມາໄດ້ໃນພາລະກິດຕໍ່ສູ້ປົດປ່ອຍຊາດ ແລະ ສ້າງສາປະເທດຊາດ; ໄດ້ກຳນົດລະບອບການເມືອງ, ເສດຖະກິດ-ສັງຄົມ, ສິດ ແລະ ພັນທະພື້ນຖານຂອງພົນລະເມືອງ ແລະ ລະບົບການຈັດຕັ້ງລັດໃນໄລຍະໃໝ່. ໃນປະຫວັດສາດຂອງຊາດເຮົາ ເທື່ອນີ້ເປັນເທື່ອທຳອິດທີ່ໄດ້ກຳນົດສິດເປັນເຈົ້າຂອງປະຊາຊົນ ຢູ່ໃນກົດໝາຍພື້ນຖານຂອງຊາດ.

ລັດຖະທຳມະນູນສະບັບນີ້ແມ່ນໝາກຜົນຂອງຂະບວນວິວັດແຫ່ງການປະກອບຄຳເຫັນຂອງປະຊາຊົນໃນທົ່ວປະເທດ ທີ່ສ່ອງແສງເຖິງເຈດຈຳນົງອັນຍາວນານ ແລະ ຄວາມຕັດສິນໃຈຢ່າງແຮງກ້າ ຂອງວົງຄະນະຍາດແຫ່ງຊາດ ທີ່ຈະພ້ອມກັນສູ້ຊົນຈົນບັນລຸຈຸດໝາຍສ້າງປະເທດຊາດລາວ ໃຫ້ເປັນປະເທດສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ ແລະ ວັດທະນະຖາວອນ.

ວັນລັດຖະທຳມະນູນ ມີຄວາມໝາຍສຳຄັນ ເຊິ່ງພັກ-ລັດພວກເຮົາໄດ້ຖືເອົາວັນລັດຖະທຳມະນູນເປັນວັນສະຫລຸບຕີລາຄາຄືນ ການເຄົາລົບ ແລະ ຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ຂອງອົງການລັດຂັ້ນຕ່າງໆ, ພະນັກງານ, ທະຫານ, ຕຳຫລວດ ແລະ ປະຊາຊົນບັນດາເຜົ່າໃຫ້ເຫັນໄດ້ດ້ານດີ, ດ້ານອ່ອນ ແລະ ບົດຮຽນທີ່ຖອດຖອນໄດ້ ເພື່ອກຳນົດທິດທາງການຈັດຕັ້ງປະຕິບັດໃນຕໍ່ໜ້າໃຫ້ສອດຄ່ອງ, ຖືກຕ້ອງແທດຕົວຈິງ ແລະ ມີປະສິດທິພາບ, ປະສິດທິຜົນແນ່ໃສ່ຍົກສູງສະຕິເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ແລະ ກົດໝາຍໃຫ້ສູງຂຶ້ນໃນທົ່ວສັງຄົມ, ຍົກສູງສະຕິຊາດ, ຄວາມເປັນເອກະພາບເປັນໜຶ່ງອັນດຽວຂອງທົ່ວປວງຊົນລາວທັງຊາດ.

ທ່ານຍັງໄດ້ໃຫ້ຮູ້ວ່າ: ມີແຕ່ສະພາແຫ່ງຊາດເທົ່ານັ້ນ ຈຶ່ງມີພາລະບົດບາດ ແລະ ສິດ ໃນການສ້າງ ແລະ ປັບປຸງລັດຖະທຳມະນູນ ແລະ ທັງເປັນພາລະບົດບາດສຳຄັນອັນໜຶ່ງ ໃນ 3 ພາລະບົດບາດ ຂອງສະພາແຫ່ງຊາດ ແລະ ສະມາຊິກສະພາແຫ່ງຊາດ. ຍ້ອນວ່າລັດຖະທຳມະນູນ ແມ່ນກົດໝາຍພື້ນຖານຂອງລັດເຮົາ ແລະ ສະພາແຫ່ງຊາດ ແມ່ນອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ (ໄດ້ຮັບການເລືອກຕັ້ງ ຫລື ມອບໝາຍຈາກປະຊາຊົນ), ເປັນຜູ້ຕົກລົງບັນດາບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ທັງເປັນອົງການນິຕິບັນຍັດທີ່ມີສິດສ້າງ ແລະ ປັບປຸງລັດຖະທຳມະນູນ ແລະ ກົດໝາຍ; ເປັນອົງການທີ່ມີພາລະບົດບາດ ໃນການຕິດຕາມກວດກາການເຄົາລົບ ແລະ ຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ຂອງລັດຖະບານ, ສານປະຊາຊົນ, ອົງການໄອຍະການປະຊາຊົນ ແລະ ອົງການປົກຄອງທ້ອງຖິ່ນ ເພື່ອຮັບປະກັນໃຫ້ລັດຖະທຳມະນູນ ແລະ ກົດໝາຍມີຜົນສັກສິດ; ສຳລັບສະມາຊິກສະພາແຫ່ງຊາດ ໃນຖານະທີ່ເປັນຕົວແທນຂອງພົນລະເມືອງຜູ້ມີສິດເລືອກຕັ້ງ ໃນແຕ່ລະເຂດເລືອກຕັ້ງ ມີທີ່ຕັ້ງພາລະບົດບາດໃນການເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ພ້ອມທັງເປັນຜູ້ສຶກສາອົບຮົມ, ໂຄສະນາ, ເຜີຍແຜ່ລັດຖະທຳມະນູນ ແລະ ກົດໝາຍ ໃຫ້ປະຊາຊົນບັນດາເຜົ່າ, ຊັ້ນຄົນຕ່າງໆ ຮັບຮູ້ ແລະ ເຂົ້າໃຈ ເປັນຕົ້ນ ຮູ້ສິດ ແລະ ພັນທະຂອງຕົນຕາມທີ່ກຳນົດໄວ້ໃນລັດຖະທຳມະນູນ ທັງມີສະຕິຕື່ນຕົວເຄົາລົບ ແລະ ປະຕິບັດສິດ ແລະ ພັນທະນັ້ນ ໃຫ້ຖືກຕ້ອງ, ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ; ຄວາມຈິງແລ້ວລັດຖະທຳມະນູນ ແຫ່ງ ສປປລາວ ແມ່ນການຜັນຂະຫຍາຍແນວທາງປ່ຽນແປງໃໝ່ຮອບດ້ານ ມີຫລັກການຂອງພັກເຮົາ ແລະ ກົດໝາຍຂອງພວກເຮົາ ແມ່ນການຜັນຂະຫຍາຍແນວທາງ, ນະໂຍບາຍຂອງພັກ ແລະ ລັດໃນແຕ່ລະຂົງເຂດ ເປັນກົດໝາຍ ແລະ ນິຕິກຳອັນລະອຽດຂອງລັດ ສປປລາວ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດຂອງຊາດ, ຂອງລັດ, ລວມໝູ່ ແລະ ພົນລະເມືອງລາວ, ກໍຄືຊາວຕ່າງດ້າວ ແລະ ຜູ້ບໍ່ມີສັນຊາດ ທີ່ອາໃສ ແລະ ທຳມາຫາກິນຢູ່ ສປປລາວ. ຍ້ອນແນວນັ້ນ, ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍກົດໝາຍ ກໍແມ່ນເພື່ອປົກປັກຮັກສາ ແລະ ສ້າງສາພັດທະນາລະບອບປະຊາທິປະໄຕປະຊາຊົນແນ່ນອນວ່າລັດຖະທຳມະນູນ ແລະ ກົດໝາຍ ໄດ້ກຳນົດຈະແຈ້ງສິ່ງໃດທີ່ພົນລະເມືອງລາວສາມາດກະທຳໄດ້ ແລະ ສິ່ງໃດທີ່ຈະເປັນຜົນຮ້າຍຕໍ່ປະເທດຊາດ, ຕໍ່ລັດ ແລະ ປະຊາຊົນນັ້ນແມ່ນຫ້າມກະທຳ ຫລື ຫ້າມເຮັດ; ດັ່ງນັ້ນ, ຖ້າພົນລະເມືອງລາວໃນສັງຄົມຫາກເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ແລະ ກົດໝາຍແລ້ວ ຈະນຳເອົາຜົນປະໂຫຍດອັນໃຫຍ່ລວງມາໃຫ້ຕົນເອງ ແລະ ສັງຄົມ, ກົງກັນຂ້າມ ຖ້າຫາກມີການລ່ວງລະເມີດລັດຖະທຳມະນູນ ແລະ ກົດໝາຍ ກໍຈະເຮັດໃຫ້ສັງຄົມບໍ່ມີຄວາມສະຫງົບ, ແລະ ບໍ່ຍຸຕິທຳ; ສະນັ້ນ, ຮຽກຮ້ອງໃຫ້ໝົດທຸກຄົນ ແລະ ທຸກການຈັດຕັ້ງຕ້ອງເຄົາລົບ ແລະ ປະຕິບັດ ຕາມລັດຖະທຳມະນູນ ແລະ ກົດໝາຍເທົ່ານັ້ນ ຈຶ່ງຈະຮັບປະກັນເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງຊາດ, ຮັບປະກັນສິດອິສະຫລະພາບ ແລະ ປະຊາທິປະໄຕຂອງປະຊາຊົນລາວບັນດາເຜົ່າຢ່າງແທ້ຈິງ.

ສຳລັບການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດໝາຍ ແມ່ນເປັນໜ້າທີ່ ແລະ ຄວາມຮັບຜິດຊອບລວມຂອງພົນລະເມືອງລາວ ແລະ ທຸກການຈັດຕັ້ງໃນສັງຄົມຂອງລະບອບປະຊາທິປະໄຕ ປະຊາຊົນຂອງປະເທດເຮົາ ທັງໃນສະເພາະໜ້າ ແລະ ຍາວນານ; ດັ່ງນັ້ນ, ຮຽກຮ້ອງໃຫ້ພະນັກງານ, ທະຫານ, ຕຳລວດ ແລະ ປະຊາຊົນບັນດາເຜົ່າ ຈົ່ງເຊີດຊູສະຕິ ຄວາມຮັບຮູ້, ຄວາມເຄົາລົບ ແລະ ຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ໃຫ້ສູງຂຶ້ນ ພ້ອມກັນຫັນເອົາການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍກົດໝາຍ ໃຫ້ມີປະສິດທິຜົນ ແລະ ປະສິດທິພາບ ເພື່ອພັດທະນາປະເທດຊາດຈະເລີນກ້າວໜ້າ.

ໃນໂອກາດນີ້, ທ່ານຍັງໄດ້ສະແດງຄວາມຮູ້ບຸນຄຸນຕໍ່ພັກປະຊາຊົນປະຕິວັດລາວ ທີ່ມີກຽດສະຫງ່າ ແລະ ບັນດາຜູ້ນຳແຕ່ລະຮຸ່ນ ທີ່ໄດ້ອຸທິດແກ່ປະເທດຊາດ ແລະ ປະຊາຊົນລາວ, ຂໍໃຫ້ຜູ້ນຳຂອງພັກ ແລະ ລັດເຮົາ ຈົ່ງມີສຸຂະພະລະເຂັ້ມແຂງ, ມີອາຍຸຍືນຍາວ, ນຳພາ-ຊີ້ນຳພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດໃຫ້ບັນລຸຈຸດໝາຍທີ່ພັກເຮົາວາງໄວ້; ອວຍພອນໃຫ້ປະຊາຊົນບັນດາເຜົ່າໃນທຸກທົ່ວໜ້າ ຈົ່ງມີຄວາມຜາສຸກ, ຄວາມຈະເລີນກ້າວໜ້າເລື້ອຍໄປ.

# ສານສູງສຸດຂອງມາເລເຊຍ ສືບສວນຄະດີສໍ້ໂກງເງິນຈາກ 1MDB

ແປ ແລະ ຮຽບຮຽງ: ນາກ ເມືອງມະໂນ

*ຖ້າສານສູງສຸດຂອງມາເລເຊຍ ພິພາກສາຍື່ນບັດລົງໂທດທັງໝົດຕາມການຕັດສິນຂອງສານຂັ້ນຕົ້ນ, ທ່ານ ນາຈິບ ຣາຊັກ ຕ້ອງຮັບໂທດຈຳຄຸກ 12 ປີ ໃນຂໍ້ຫາສໍ້ໂກງເງິນຫລາຍກວ່າ 140 ຕື້ກີບ ຈາກກອງທຶນຍ່ອຍຂອງ "1MDB".*

ອີງຕາມການລາຍງານຂ່າວເມື່ອວັນທີ 15 ສິງຫາ 2022 ໄດ້ລາຍງານວ່າ: ຄະນະຕຸລາການ 5 ທ່ານຂອງສານສູງສຸດມາເລເຊຍ ໄດ້ເລີ່ມພິຈາລະນາຄຳຮ້ອງອຸທອນຂອງທ່ານ ນາຈິບ ຣາຊັກ ອະດີດນາຍົກລັດຖະມົນຕີມາເລເຊຍ ໃນຄະດີສໍ້ໂກງເງິນຂອງກອງທຶນພັດທະນາແຫ່ງຊາດ "One MalaysiaDevelopmentBerhad" ຫລື "1MDB" ເຊິ່ງໄອຍະການສູງສຸດຂອງມາເລເຊຍ ມີຄຳເຫັນວ່າ: ທ່ານ ນາຈິບ ຣາຊັກ ໄດ້ສໍ້ໂກງເງິນອອກຈາກກອງທຶນປະມານ 18.364,35 ລ້ານຣິງກິດ (ປະມານ 62.018 ຕື້ກວ່າກີບ) ລະຫວ່າງປີ 2009-2014.

ໃນການພິຈາລະນາຄະດີຂອງສານສູງສຸດ ຈະດຳເນີນໄປຮອດວັນທີ 26 ສິງຫານີ້ ເຊິ່ງດ້ານທ່ານ ນາຈິບ ຣາຊັກ ແມ່ນຢືນຢັນປະຕິເສດທຸກຂໍ້ກ່າວຫາຕັ້ງແຕ່ການພິຈາລະນາຂອງສານຂັ້ນຕົ້ນ ກ່ຽວກັບການສວຍໃຊ້ອຳນາດ, ຟອກເງິນ ແລະ ສວຍໃຊ້ອຳນາດໃນທາງບໍ່ຖືກຕ້ອງ ສໍ້ໂກງເງິນ 42 ລ້ານຣິງກິດ (ປະມານ 141,8 ຕື້ກວ່າກີບ) ຈາກ SRC International ເຊິ່ງແມ່ນໜຶ່ງໃນກອງທຶນຍ່ອຍຂອງ 1MDB ເຂົ້າສູ່ລະບົບບັນຊີສ່ວນບຸກຄົນ ໃນໄລຍະການຄຸ້ມຄອງກອງທຶນໃນໄລຍະປີ 2011-2015.

ສຳລັບກໍລະນີຂອງ SRC ເປັນກໍລະນີທຳອິດຈາກຫລາຍສິບກໍລະນີຂອງ 1MDB ທີ່ສານຂັ້ນຕົ້ນໄດ້ຕັດສິນໃນປີ 2020 ວ່າ: ທ່ານ ນາຈິບ ຣາຊັກ ຕ້ອງຮັບໂທດຈຳຄຸກ 12 ປີ ແລະ ຕ້ອງຈ່າຍຄ່າເສຍຫາຍ 210 ລ້ານລິງກິດ (ປະມານ 709,2 ຕື້ກວ່າກີບ) ແລະ ສານອຸທອນກໍໄດ້ຕັດສິນຕາມສານຂັ້ນໃນປີ 2021 ເຊິ່ງຖ້າສານສູງສຸດ ຍັງສືບຕໍ່ຮັກສາຕາມຄຳຕັດສິນຂອງສານອຸທອນ ນັ້ນໝາຍຄວາມວ່າ ທ່ານ ນາຈິບ ຣາຊັກ ຕ້ອງໄດ້ຮັບໂທດຕາມຄຳຕັດສິນດັ່ງກ່າວ.

ມີຫລາຍພາກສ່ວນໄດ້ວິເຄາະວ່າ ເຖິງແມ່ນບໍ່ວ່າ ຄຳຕັດສິນຈະອອກມາແນວໃດ ອາດຈະສົ່ງຜົນຕໍ່ການເລືອກຕັ້ງທົ່ວໄປຂອງມາເລເຊຍທີ່ກຳນົດໃຫ້ມີຂຶ້ນກ່ອນວັນທີ 14 ກັນຍາປີໜ້າເນື່ອງຈາກວ່າ ທ່ານ ນາຈິບ ຣາຊັກ ມີບົດບາດໃນຖານະຜູ້ນຳສຳຄັນຂອງພັກສາມັກຄີແຫ່ງຊາດມາເລຢູ (UMNO).

**ແຫລ່ງຂໍ້ມູນ: REUTERS**



# ເສັ້ນທາງລົດໄຟຂອງຈີນ ກາຍເປັນສັນຍາລັກທີ່ດີໃນການສ້າງ "ໜຶ່ງແລວໜຶ່ງເສັ້ນທາງ"

ແປ ແລະ ຮຽບຮຽງ: ປາກາລັກ



*ໃນຊຸມປີມໍ່ໆມານີ້, ຈີນມີຫລາຍໂຄງການຮ່ວມມືທາງລົດໄຟໄດ້ກ້າວໄປສູ່ຕ່າງປະເທດ ໂດຍໄດ້ກາຍເປັນລູກກະແຈຄຳທີ່ຊຸກຍູ້ການພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ.*

ໃນວັນທີ 11 ສິງຫານີ້, ທ່ານ ວ່າງເວີນປິ່ນ ໂຄສົກກະຊວງການຕ່າງປະເທດຈີນ ໄດ້ກ່າວໃນກອງປະຊຸມຖະແຫລງຂ່າວວ່າ: ໃນຊຸມປີມໍ່ໆມານີ້, ເສັ້ນທາງລົດໄຟຂອງຈີນໄດ້ເລັ່ງບາດກ້າວໄປສູ່ຕ່າງປະເທດຢ່າງບໍ່ຢຸດຢັ້ງ ເຊິ່ງໄດ້ພັດທະນາໄປສູ່ອາຊີ, ເອີຣົບ, ອາເມຣິກາເໜືອ ແລະ ອາຟຣິກາ, ໄດ້ກາຍເປັນສັນຍາລັກທີ່ດີໃນການສ້າງ "ໜຶ່ງແລວໜຶ່ງເສັ້ນທາງ" ແລະ ການຮ່ວມມືດ້ານຄວາມສາມາດໃນການຜະລິດສາກົນ ທັງໄດ້ປະກອບສ່ວນກຳລັງແຮງຂອງຈີນເຂົ້າໃນພາລະກິດການພັດທະນາຂອງໂລກ.

ຕົວຢ່າງ: ໃນຂະບວນການສ້າງເສັ້ນທາງລົດໄຟຈີນ-ລາວ ໄດ້ສ້າງວຽກເຮັດງານທຳໃຫ້ກັບປະຊາຊົນລາວ 110.000 ເທື່ອຄົນ, ໄດ້ຊ່ວຍເຫລືອປະເທດລາວສ້າງເສັ້ນທາງຫລວງ ແລະ ຮ່ອງນ້ຳເກືອບ 2.000 ກິໂລແມັດ ແລະ ໄດ້ຊຸກຍູ້ໃຫ້ການຈຳໜ່າຍວັດຖຸດິບຢູ່ລາວມີມູນຄ່າຫລາຍກວ່າ 5,1 ຕື້ຢວນ (ປະມານ 756 ລ້ານໂດລາ). ນັບແຕ່ເປີດການບໍລິການມາເປັນເວລາ 8 ເດືອນມານີ້, ຄວາມສາມາດໃນການຂົນສົ່ງສິນຄ້າຂ້າມຊາດຂອງເສັ້ນທາງລົດໄຟຈີນ-ລາວໄດ້ເພີ່ມສູງຂຶ້ນຢ່າງຈະແຈ້ງ, ປະເພດສິນຄ້າໄດ້ເພີ່ມຂຶ້ນຫລາຍກວ່າ 12 ເທົ່າ, ການທ່ອງທ່ຽວຕາມເສັ້ນທາງລົດໄຟ, ການຈໍລະຈອນສິນຄ້າ ແລະ ການກໍ່ສ້າງພື້ນຖານໂຄງລ່າງກໍໄດ້ຍົກສູງຄຸນນະພາບຂຶ້ນ.

ທ່ານ ວ່າງເວີນປິ່ນ ກ່າວຕື່ມວ່າ: ເສັ້ນທາງລົດໄຟບໍ່ພຽງແຕ່ໄດ້ສົ່ງຜະລິດຕະພັນ, ເຕັກນິກ ແລະ ການບໍລິການຂອງຈີນໄປສູ່ຕ່າງປະເທດເທົ່ານັ້ນ, ຍັງໄດ້ສ້າງໂອກາດພັດທະນາຫລາຍກວ່າເກົ່າ ໃຫ້ກັບປະເທດທີ່ກ່ຽວຂ້ອງ ແລະ ໄດ້ບັນທຸກໄມຕີຈິດມິດຕະພາບ ລະຫວ່າງຈີນກັບປະເທດທີ່ກ່ຽວຂ້ອງ. ການທີ່ເສັ້ນທາງລົດໄຟຂອງຈີນໄດ້ສ້າງຂຶ້ນ ແລະ ພັດທະນາຢ່າງສຳເລັດຜົນຢູ່ແຫ່ງຕ່າງໆຂອງໂລກໄດ້ສະແດງໃຫ້ເຫັນວ່າ: ມີແຕ່ສະພາບການພັດທະນາທີ່ຮ່ວມກັນສ້າງຜົນປະໂຫຍດທົ່ວໄປຢ່າງດຸນດ່ຽງ, ປະສານງານແບບກວມລວມ, ການຮ່ວມມືແບບຕ່າງຝ່າຍຕ່າງມີຜົນປະໂຫຍດ ແລະ ມີຄວາມຈະເລີນຮຸ່ງເຮືອງຮ່ວມກັນ ຈຶ່ງແມ່ນເສັ້ນທາງທີ່ຖືກຕ້ອງໃນການຊຸກຍູ້ການພັດທະນາຂອງໂລກ. ຈີນຈະຮ່ວມກັບຝ່າຍຕ່າງໆ, ຍຶດໝັ້ນຊຸກຍູ້ການຮ່ວມກັນສ້າງ "ໜຶ່ງແລວໜຶ່ງເສັ້ນທາງ" ໃຫ້ພັດທະນາດ້ວຍຄຸນນະພາບສູງຢ່າງໝັ້ນໝຽວບໍ່ປ່ຽນແປງ ເພື່ອປະກອບສ່ວນກຳລັງແຮງຂອງຕົນເຂົ້າໃນການບັນລຸການຮ່ວມກັນພັດທະນາຢ່າງມີຄວາມຈະເລີນຮຸ່ງເຮືອງ.

ທະນາຄານພັດທະນາລາວ LDB Bank

ທະນາຄານພົງສະຫວັນ Phongsavanh BANK







**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຫົວໜ້າບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ
ທ່ານ ຂັນທະວີ ວົງພະຈັນ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອຳພັນ
ທ່ານ ນາງ ສຸພາວັນ ຫອມສະນິດ
ທ່ານ ນາງ ປາກາລັກ ພົມມີໄຊ

**ອອກແບບຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ